ບໍລິສັດ ຊິມັ້ງລາວ ມະຫາຊົນ

ເອກະສານລາຍງານການເງິນ

ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2020

ບໍລິສັດ ຊີມັ້ງລາວ ມະຫາຊົນ

ສາລະບານ

	ໜ້າ
ຂໍ້ມູນທົ່ວໄປ	1 - 3
ບົດລາຍງານຂອງຄະນະບໍລິຫານ	4
ບົດລາຍງານເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີທີ່ຖືກທົບທວນຄືນແລ້ວ	5 - 6
ໃບລາຍງານຖານະການເງິນສຳລັບໄລຍະຫົກເດືອນຕົ້ນປີ	7 - 8
ໃບລາຍງານຜົນການດຳເນີນງານສຳລັບໄລຍະຫົກເດືອນຕົ້ນປີ	9
ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງສຳລັບໄລຍະຫົກເດືອນຕົ້ນປີ	10
ໃບລາຍງານກະແສເງິນສົດສຳລັບໄລຍະຫົກເດືອນຕົ້ນປີ	11
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີ	12 - 31

ບໍລິສັດ ຊິມັ່ງລາວ ມະຫາຊົນ

ຂໍ້ມູນທົ່ວໄປ

ບໍລິສັດ

ບໍລິສັດ ຊິມັ່ງລາວ ມະຫາຊົນ ("ບໍລິສັດ"), ກ່ອນໜ້ານີ້ແມ່ນ ບໍລິສັດ ຊິມັ່ງລາວ ຈຳກັດ ຖືກສ້າງຕັ້ງຂຶ້ນຕາມກົດລະບຽບພາຍໃນຂອງ ບໍລິສັດທີ່ເຊັ່ນຮັບຮອງ ທີ່ນະຄອນຫຼວງວຽງຈັນ, ສປປ ລາວ ໃນວັນທີ 15 ທັນວາ 1998 ລະຫວ່າງ ລັດວິສາຫະກິດພັດທະນາກະສິກຳ-ອຸດສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ (DAI) ("ຝ່າຍ ກ") ກັບ ບໍລິສັດຮ່ວມມືສາກົນດ້ານເສດຖະກິດ-ເຕັກນິກຢຸນນານ ສປ ຈີນ (CYC) ("ຝ່າຍ ຂ").

ວັນທີ 6 ທັນວາ 1999, ບໍລິສັດໄດ້ຮັບໃບທະບຽນຄັ້ງທຳອິດເລກທີ 1154/ຈທກ ທີ່ອອກໂດຍກະຊວງອຸດສະຫະກຳ ແລະ ການຄ້າ, ເຊິ່ງ ບໍລິສັດໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດກ່ຽວກັບຊິມັ່ງ ແລະ ຜະລິດຕະພັນຕ່າງໆທີ່ກ່ຽວຂ້ອງກັບຊິມັ່ງ ເພື່ອການຈຳໜ່າຍພາຍໃນ ແລະ ສົ່ງອອກ.

ບໍລິສັດໄດ້ມີການດັດແກ້ໃບທະບຽນວິສາຫະກິດດັ່ງລຸ່ມນີ້:

ໃບທະບຽນວິສາຫະກິດ	*ວັນທີ*
0078/ຈທກ	5 ເມສາ 2006
1719/ຈທກ	26 ກຸມພາ 2009
0244/ຈທກ	20 ກຸມພາ 2012
1436/ຈທກ	15 ພະຈິກ 2012
791/ຈທກ	13 ພະຈິກ 2015
1016/ຈທກ	5 ທັນວາ 2016
0247/ຈທກ	24 ມີນາ 2017
0688/ຈທກ	2 ສິງຫາ 2017
0160/ຈທກ	20 ກຸມພາ 2018

ພາຍໃນໄລຍະ, ກິດຈະກຳຫຼັກທີ່ດຳເນີນໂດຍບໍລິສັດແມ່ນມີດັ່ງນີ້:

- ຜະລິດຊິມັ່ງ ແລະ ຜະລິດຕະພັນອື່ນໆທີ່ກ່ຽວຂ້ອງກັບຊິມັ່ງ;
- ຂາຍສົ່ງ ແລະ ຂາຍຍ່ອຍຊິມັ່ງ ແລະ ຜະລິດຕະພັນອື່ນໆທີ່ກ່ຽວຂ້ອງກັບຊິມັ່ງສຳລັບການບໍລິໂພກພາຍໃນ ແລະ ສົ່ງອອກ.

ສຳນັກງານໃຫຍ່ທີ່ໄດ້ລົງທະບຽນຂອງບໍລິສັດຕັ້ງຢູ່ ຖະໜົນໜອງບອນ, ບ້ານໜອງບອນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ. ບໍລິສັດຍັງມີໂຮງງານຊິມັ່ງວັ້ງວຽງ ຫຼັງ 2 ຢູ່ເມືອງວັ້ງວຽງ, ແຂວງ ວຽງຈັນ, ສປປ ລາວ.

ສະພາອຳນວຍການ

ສະມາຊິກສະພາອຳນວຍການພາຍໃນໄລຍະ ແລະ ນະອັນທີ່ອອກເອກະສານລາຍງານການເງິນສະບັບນີ້ລວມມີ:

ຊື່	*ຕຳແໜ່ງ*	*ອັນທີ່ແຕ່ງຕັ້ງ*
ທ່ານ ຫຼີ ເຫວີຍ	ປະທານ	ລາອອກວັນທີ 23 ມິຖຸນາ 2020
ທ່ານ ຢາງ ຊຸນຢິນ	ປະທານ	ແຕ່ງຕັ້ງວັນທີ 23 ມິຖຸນາ 2020
ທ່ານ ບຸນແປງ ບົວພັນ	ຮອງປະທານ	ລາອອກວັນທີ 23 ມິຖຸນາ 2020
ທ່ານ ວັນທອງ ສິດທິກຸນ	ຮອງປະທານ	ແຕ່ງຕັ້ງວັນທີ 23 ມິຖຸນາ 2020
ທ່ານ ຈ່າງ ລີ້	ສະມາຊິກ	
ທ່ານ ລີ ມິ່ງ	ສະມາຊິກ	ລາອອກວັນທີ 23 ມິຖຸນາ 2020
ທ່ານ ອຸ ຢາງ ຊຸ ຢິ່ງ	ສະມາຊິກ	ແຕ່ງຕັ້ງວັນທີ 23 ມິຖຸນາ 2020
ທ່ານ ເຈຍ ເຢົາຊີ	ສະມາຊິກ	
ທ່ານ ຄຳບິນ ໄຊເລົ່າວົ່ງ	ສະມາຊິກ	
ທ່ານ ທອງປົນ ກິ່ງຄຳເພັດ	ສະມາຊິກ	ລາອອກວັນທີ 23 ມິຖຸນາ 2020
ທ່ານ ວິຈິດ ສຸວັນນະລາດ	ສະມາຊິກ	ແຕ່ງຕັ້ງວັນທີ 23 ມິຖຸນາ 2020
ທ່ານ ສ່ຽວ ເຈຍ	ສະມາຊິກອິດສະຫຼະ	
ທ່ານ ຫຼີ ຊຸນ ໂປ	ສະມາຊິກອິດສະຫຼະ	
ທ່ານ ວົ່ງວິຈິດ ແກ້ວວົ່ງກິດ	ສະມາຊິກອິດສະຫຼະ	

ຄະນະບໍລິຫານຂອງບໍລິສັດ

ສະມາຊິກຄະນະບໍລິຫານຂອງບໍລິສັດພາຍໄລຍະ ແລະ ນະອັນທີ່ອອກເອກະສານລາຍງານການເງິນສະບັບນີ້ລວມມີ:

ຊື່	*ຕຳແໜ່ງ*	*ອັນທີ່ແຕ່ງຕັ້ງ*
ທ່ານ ຈ່າງ ລີ້	ຜູ້ອຳນວຍການໃຫຍ່	
ທ່ານ ວິຈິດ ສຸວັນນະລາດ	ຮອງຜູ້ອຳນວຍການໃຫຍ່	ແຕ່ງຕັ້ງວັນທີ 23 ມິຖຸນາ 2020
ທ່ານ ຫຼີ ເຫວີຍ	ຜູ້ອຳນວຍການ	ລາອອກວັນທີ 23 ມິຖຸນາ 2020
ທ່ານ ບຸນແປງ ບົວພັນ	ຜູ້ອຳນວຍການ	ລາອອກວັນທີ 23 ມິຖຸນາ 2020
ທ່ານ ລີ ມິ່ງ	ຜູ້ອຳນວຍການ	ລາອອກວັນທີ 23 ມິຖຸນາ 2020
ທ່ານ ເຈຍ ເຢົາຊີ	ຜູ້ອຳນວຍການ	
ທ່ານ ຄຳບິນ ໄຊເລົ່າວົ່ງ	ຜູ້ອຳນວຍການ	
ທ່ານ ທອງປົນ ກິ່ງຄຳເພັດ	ຜູ້ອຳນວຍການ	ລາອອກວັນທີ 23 ມິຖຸນາ 2020
ທ່ານ ສ່ຽວ ເຈຍ	ຜູ້ອຳນວຍການ	
ທ່ານ ຫຼີ ຊຸນ ໂປ	ຜູ້ອຳນວຍການ	
ທ່ານ ວົ່ງວິຈິດ ແກ້ວວົ່ງກິດ	ຜູ້ອຳນວຍການ	

ບໍລິສັດ ຊິມັງລາວ ມະຫາຊົນ

ຂໍ້ມູນທົ່ວໄປ (ຕໍ່)

ຄະນະກຳມະການກວດສອບ

ສະມາຊິກຄະນະກຳມະການກວດສອບຂອງບໍລິສັດພາຍໃນໄລຍະ ແລະ ນະອັນທີອອກເອກະສານລາຍງານການເງິນສະບັບນີ້ລວມມີ:

ທ່ານ ສ່ຽວ ເຈຍ	ປະທານ
ທ່ານ ຫຼີ ຊຸນ ໂປ	ສະມາຊິກ
ທ່ານ ວິງວິຈິດ ແກ້ວວິງກິດ	ສະມາຊິກ

ຕົວແທນທາງດ້ານກົດໝາຍ

ຕົວແທນທາງດ້ານກົດໝາຍຂອງບໍລິສັດພາຍໃນໄລຍະ ແລະ ນະອັນທີອອກເອກະສານລາຍງານການເງິນສະບັບນີ້ແມ່ນ ທ່ານ ຈ່າງ ລີ້, ຜູ້ອຳນວຍການໃຫຍ່.

ນັກກວດສອບບັນຊີ

ນັກກວດສອບບັນຊີຂອງບໍລິສັດແມ່ນ ບໍລິສັດ ເອິນແອນຢັ້ງ ລາວ ຈຳກັດ.

ບໍລິສັດ ຊີມັງລາວ ມະຫາຊົນ

ບົດລາຍງານຂອງຄະນະບໍລິຫານ

ຄະນະບໍລິຫານບໍລິສັດ ຊີມັງລາວ ມະຫາຊົນ ("ບໍລິສັດ") ມີຄວາມຍິນດີນຳສະເໜີບົດລາຍງານຂອງຕົນເອງ ແລະ ພ້ອມທັງເອກະສານລາຍງານການເງິນຂອງບໍລິສັດ ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2020.

ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີ

ຄະນະບໍລິຫານມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີ ເຊິ່ງຈະຕ້ອງກະກຽມໂດຍອີງຕາມນະໂຍບາຍການບັນຊີດັ່ງທີ່ໄດ້ລະບຸໃນບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີ ເລກທີ 3. ນະໂຍບາຍການບັນຊີເຫຼົ່ານີ້ແມ່ນບໍ່ໄດ້ມີຈຸດປະສົງເພື່ອນຳສະເໜີຖານະການເງິນສຳລັບໄລຍະຫົກເດືອນຕົ້ນປີ, ຜົນຂອງການດຳເນີນທຸລະກິດ ແລະ ກະແສເງິນສົດສຳລັບໄລຍະຫົກເດືອນຕົ້ນປີຂອງບໍລິສັດ ໂດຍສອດຄ່ອງຕາມຫຼັກການບັນຊີສາກົນທີ່ຖືກຍອມຮັບໂດຍທົ່ວໄປ. ໃນການກະກຽມເອກະລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີ, ຄະນະບໍລິຫານຕ້ອງ:

- ເລືອກເຟັ້ນເອົານະໂຍບາຍການບັນຊີທີ່ເໝາະສົມ ແລະ ນຳໃຊ້ຢ່າງສອດຄ່ອງ;
- ພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ລະອຽດຮອບຄອບ;
- ຖະແຫຼງການວ່າ ບັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດ, ທຸກຂໍ້ຂັດແຍ່ງ ຫຼື ການລະເມີດທີ່ສຳຄັນຕໍ່ທີ່ຖືກນຳມາເປີດເຜີຍ ແລະ ອະທິບາຍໃນເອກະສານລາຍງານການເງິນ; ແລະ,
- ກະກຽມເອກະສານລາຍງານການເງິນບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນໃນກໍລະນີທີ່ບໍລິສັດຫາກຕັ້ງຂໍ້ສົມມຸດຖານວ່າ ບໍລິສັດຈະບໍ່ສາມາດດຳເນີນທຸລະກິດຕໍ່ໄປໄດ້.

ຄະນະບໍລິຫານ ມີຄວາມຮັບຜິດຊອບໃນການຮັບປະກັນວ່າບັນດາຂໍ້ມູນທາງການບັນຊີທີ່ຖືກບັນທຶກໄວ້ນັ້ນໄດ້ຮັບການເປີດເຜີຍຕາມຄວາມຖືກຕ້ອງເໝາະສົມຢູ່ຕະຫຼອດເວລາ, ກ່ຽວກັບຖານະການເງິນສຳລັບໄລຍະຫົກເດືອນຕົ້ນປີຂອງບໍລິສັດ ແລະ ຮັບປະກັນວ່າ ເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີ ໄດ້ສອດຄ່ອງກັບຫຼັກການທາງດ້ານບັນຊີທີ່ເໝາະສົມ. ຄະນະບໍລິຫານຍັງມີຄວາມຮັບຜິດຊອບໃນການຮັກສາຊັບສິນຂອງບໍລິສັດ ແລະ ຕ້ອງມີຂັ້ນຕອນທີ່ເໝາະສົມໃນການປ້ອງກັນ ແລະ ຊອກຫາການສໍ້ໂກງ ແລະ ສິ່ງຜິດປົກກະຕິອື່ນໆ.

ຄະນະບໍລິຫານຢັ້ງຢືນວ່າ ໄດ້ປະຕິບັດຕາມທຸກຂໍ້ກຳນົດຂ້າງເທິງໃນການກະກຽມເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີສະບັບນີ້.

ຖະແຫຼງການຂອງຄະນະບໍລິຫານ

ພວກຂ້າພະເຈົ້າ ຂໍຖະແຫຼງວ່າ, ຕາມຄຳເຫັນຂອງຄະນະບໍລິຫານ, ເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2020 ແມ່ນຖືກກະກຽມຢ່າງຖືກຕ້ອງຕາມຄວາມເປັນຈິງ, ໂດຍອີງຕາມນະໂຍບາຍການບັນຊີທີ່ໄດ້ລະບຸໄວ້ໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີ.

ໃນນາມສະພາບໍລິຫານ:

ທ້າວ ຈ່າງ ລີ

ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

7 ກັນຍາ 2020

Ernst & Young Lao Co., Ltd
6th floor, Kolao Tower I, 23 Singha Road
Nongbone Village, Saysettha District
Vientiane Capital, Lao P.D.R.

Tel: +856 21 455 077
Fax: +856 21 455 078
ey.com

Building a better working world

ເລກທີອ້າງອີງ: 61228095/22041913-LR

ບົດລາຍງານເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີທີ່ຖືກທົບທວນຄືນແລ້ວ

ຮຽນ: ຜູ້ຖືຮຸ້ນຂອງ ບໍລິສັດ ຊີມັ່ງລາວ ມະຫາຊົນ ທີ່ນັບຖື

ພາກສະເໜີ

ພວກຂ້າພະເຈົ້າ ໄດ້ດຳເນີນການທົບທວນຄືນເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີຂອງ ບໍລິສັດ ຊີມັ່ງລາວ ມະຫາຊົນ ("ບໍລິສັດ"), ເຊິ່ງປະກອບດ້ວຍໃບລາຍງານຖານະການເງິນສຳລັບໄລຍະຫົກເດືອນຕົ້ນປີ ນະວັນທີ 30 ມິຖຸນາ 2020, ແລະ ໃບລາຍງານຜົນການດຳເນີນງານສຳລັບໄລຍະຫົກເດືອນຕົ້ນປີທີ່ກ່ຽວຂ້ອງ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງສຳລັບໄລຍະຫົກເດືອນຕົ້ນປີ ແລະ ໃບລາຍງານກະແສເງິນສົດສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດວັນທີດັ່ງກ່າວ, ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີ, ລວມທັງສະຫຼຸບນັນດານະໂຍບາຍການບັນຊີທີ່ສຳຄັນ.

ຄະນະບໍລິຫານຮັບຜິດຊອບສຳລັບການກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີ ເຊິ່ງສອດຄ່ອງກັບນະໂຍບາຍການບັນຊີທີ່ໄດ້ເປີດເຜີຍໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີ. ຄວາມຮັບຜິດຊອບຂອງພວກຂ້າພະເຈົ້າແມ່ນດຳເນີນການທົບທວນຄືນໂດຍອີງຕາມມາດຕະຖານສາກົນວ່າດ້ວຍການທົບທວນຄືນເລກທີ 2410, *ການທົບທວນຄືນຂໍ້ມູນທາງການເງິນສຳລັບໄລຍະຫົກເດືອນຕົ້ນປີ ທີ່ດຳເນີນໂດຍນັກກວດສອບອິດສະຫຼະ* ແລະ ອອກບົດສະຫຼຸບຕໍ່ເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີຕາມການທົບທວນຂອງພວກຂ້າພະເຈົ້າ. ເຖິງຢ່າງໃດກໍ່ຕາມ, ເນື່ອງຈາກບັນຫາທີ່ໄດ້ອະທິບາຍໄວ້ໃນວັກພື້ນຖານສຳລັບການສະຫຼຸບແບບບໍ່ອອກຄຳເຫັນຂອງບົດລາຍງານຂອງພວກຂ້າພະເຈົ້າ, ພວກຂ້າພະເຈົ້າບໍ່ສາມາດໄດ້ຮັບຫຼັກຖານຢ່າງພຽງພໍທີ່ຈະສະໜອງພື້ນຖານສຳລັບການສະຫຼຸບການທົບທວນຄືນຕໍ່ເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີດັ່ງກ່າວ.

ພື້ນຖານສຳລັບການສະຫຼຸບແບບບໍ່ອອກຄຳເຫັນ

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ຕໍ່ບົດອະທິບາຍເລກທີ 2 ຂອງເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີ ເຊິ່ງຖະແຫຼງວ່າ ບໍລິສັດໄດ້ຂາດທຶນສຸດທິມູນຄ່າ 15 ຕື້ກີບ ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2020. ນະວັນທີດັ່ງກ່າວ, ບໍລິສັດມີຂາດທຶນສະສົມມູນຄ່າ 11 ຕື້ກີບ. ເນື່ອງຈາກຜົນກະທົບຂອງມາດຕະການປ້ອງກັນການແຜ່ລະບາດຂອງພະຍາດໂຄວິດ 19 ໂດຍລັດຖະບານແຫ່ງ ສປປ ລາວ ແລະ ບັນຫາທາງດ້ານເສດຖະກິດ, ບໍລິສັດໄດ້ຢຸດການຜະລິດທັງໝົດຊົ່ວຄາວຕັ້ງແຕ່ເດືອນ ເມສາ 2020. ເງື່ອນໄຂດັ່ງກ່າວນີ້ໄດ້ຊີ້ໃຫ້ເຫັນຄວາມບໍ່ແນ່ນອນທີ່ມີຄວາມສຳຄັນ ເຊິ່ງອາດເກີດການສົງໄສຢ່າງໃຫຍ່ຫຼວງກ່ຽວກັບຄວາມສາມາດໃນການສືບເນື່ອງໃນການດຳເນີນທຸລະກິດຂອງບໍລິສັດ.

ເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2020 ແມ່ນຖືກກະກຽມບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດໂດຍອີງຕາມຂໍ້ສົມມຸດຖານທີ່ວ່າ ບໍລິສັດສາມາດກັບຄືນມາດຳເນີນການໄດ້ຫຼັງຈາກການຊອກຫານັກລົງທຶນໃໝ່ ແລະ/ຫຼື ການປັບປຸງໂຄງສ້າງກິດຈະກຳຂອງບໍລິສັດພາຍໃນ 12 ເດືອນຂ້າງໜ້າຈາກວັນທີຂອງໃບລາຍງານຖານະການເງິນ. ຄະນະບໍລິຫານຂອງບໍລິສັດໄດ້ປຶກສາກັບຂາຮຸ້ນຫຼັກໃນການພັດທະນາແຜນດຳເນີນທຸລະກິດທີ່ເໝາະສົມສຳລັບອະນາຄົດອັນໃກ້. ນະວັນທີຂອງບົດລາຍງານການເງິນສະບັບນີ້, ການປຶກສາຫາລື ແລະ ແຜນດຳເນີນທຸລະກິດແມ່ນຍັງບໍ່ທັນສຳເລັດ. ອີງຕາມຂໍ້ມູນທີ່ມີຢູ່ໃນປະຈຸບັນ, ພວກຂ້າພະເຈົ້າບໍ່ສາມາດໄດ້ຮັບຫຼັກຖານຢ່າງພຽງພໍ ແລະ ເໝາະສົມ ເພື່ອກວດຄືນຂໍ້ສົມມຸດຖານທີ່ເຮັດໂດຍຄະນະບໍລິຫານຂອງບໍລິສັດໃນການກະກຽມແຜນດຳເນີນທຸລະກິດທີ່ກ່າວມາຂ້າງເທິງ. ດ້ວຍເຫດນີ້ນ, ພວກຂ້າພະເຈົ້າຈຶ່ງບໍ່ສາມາດໝັ້ນໃຈໄດ້ເຖິງຄວາມເໝາະສົມຂອງການນຳໃຊ້ຂໍ້ສົມມຸດຖານຫຼັກການແຫ່ງຄວາມສືບເນື່ອງໃນການກະກຽມເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2020.

A member firm of Ernst & Young Global Limited

Building a better working world

ການສະຫຼຸບແບບບໍ່ອອກຄຳເຫັນ

ເນື່ອງຈາກບັນຫາໃຫຍ່ຫຼວງທີ່ໄດ້ອະທິບາຍໃນວັກ ພື້ນຖານສຳລັບການສະຫຼຸບແບບບໍ່ອອກຄຳເຫັນ, ພວກຂ້າພະເຈົ້າບໍ່ສາມາດໄດ້ຮັບຫຼັກຖານການກວດສອບຢ່າງພຽງພໍເໝາະສົມເພື່ອສະໜອງພື້ນຖານສຳລັບການສະຫຼຸບ. ດ້ວຍເຫດນັ້ນ, ພວກຂ້າພະເຈົ້າບໍ່ສາມາດອອກຂໍ້ສະຫຼຸບຕໍ່ເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີຂອງບໍລິສັດໄດ້.

ບັນຫາທີ່ຄວນເອົາໃຈໃສ່ - ພື້ນຖານຂອງການບັນຊີ

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ຕໍ່ບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີ, ເຊິ່ງໄດ້ລະບຸກ່ຽວກັບນະໂຍບາຍການບັນຊີທີ່ຖືກນຳໃຊ້ໂດຍບໍລິສັດ. ນະໂຍບາຍການບັນຊີເຫຼົ່ານີ້ ບໍ່ໄດ້ມີຈຸດປະສົງເພື່ອສະແດງຖານະການເງິນສຳລັບໄລຍະຫົກເດືອນຕົ້ນປີ, ຜົນການດຳເນີນງານສຳລັບໄລຍະຫົກເດືອນຕົ້ນປີ ແລະ ກະແສເງິນສົດສຳລັບໄລຍະຫົກເດືອນຕົ້ນປີຂອງບໍລິສັດ ເພື່ອໃຫ້ສອດຄ່ອງກັບຫຼັກການບັນຊີສາກົນທີ່ຖືກຍອມຮັບໂດຍທົ່ວໄປ. ການສະຫຼຸບຂອງພວກຂ້າພະເຈົ້າແມ່ນບໍ່ໄດ້ສະແດງຄຳເຫັນແບບມີເງື່ອນໄຂຕໍ່ບັນຫານີ້.

ໃນນາມ ແລະ ຕາງໜ້າຂອງບໍລິສັດ ເອີນແອນຢັ້ງ ລາວ ຈຳກັດ

ແອ້ັງ ຫວ ຈີ
ຂາຮຸ້ນ

ນະຄອນຫຼວງວຽງຈັນ, ສປປ ລາວ

7 ກັນຍາ 2020

A member firm of Ernst & Young Global Limited

ບໍລິສັດ ຊີມັ່ງລາວ ມະຫາຊົນ

ໃບລາຍງານຖານະທາງການເງິນສຳລັບໄລຍະຫົກເດືອນຕົ້ນປີ
ນະອັນທີ 30 ມິຖຸນາ 2020

	ບົດອະທິບາຍ ເລກທີ	*30 ມິຖຸນາ 2020 ກີບ*	*31 ທັນວາ 2019 ກີບ*
ຊັບສິນ			
ຊັບສິນບໍ່ໝຸນວຽນ			
ຊັບສິນບັດຄົງທີ່ມີຕົວຕົນ	4	19,524,492,866	23,979,494,095
ຊັບສິນພວມກໍ່ສ້າງ	5	6,715,965,357	6,380,185,757
ຊັບສິນບັດຄົງທີ່ບໍ່ມີຕົວຕົນ		328,548,475	328,548,475
ຊັບສິນບໍ່ໝຸນວຽນອື່ນໆ	6	273,520,000	305,080,000
ລວມຊັບສິນບໍ່ໝຸນວຽນ		**26,842,526,698**	**30,993,308,327**
ຊັບສິນໝຸນວຽນ			
ຊັບສິນໝຸນວຽນອື່ນໆ	7	433,617,828	1,977,956,996
ເຄື່ອງໃນສາງ	8	27,525,207,688	39,167,406,250
ໜີ້ຕ້ອງຮັບອື່ນໆ	9	182,931,850	256,035,247
ເງິນລ່ວງໜ້າໃຫ້ແກ່ຜູ້ສະໜອງ		1,133,482,116	72,737,500
ໜີ້ຕ້ອງຮັບການຄ້າ	10	41,285,131,188	47,409,610,309
ເງິນສົດ	11	3,829,234,948	6,042,043,762
ລວມຊັບສິນໝຸນວຽນ		**74,389,605,618**	**94,925,790,064**
ລວມຊັບສິນທັງໝົດ		**101,232,132,316**	**125,919,098,391**

ບໍລິສັດ ຊີມັງລາວ ມະຫາຊົນ

ໃບລາຍງານຖານະທາງການເງິນສຳລັບໄລຍະຫົກເດືອນຕົ້ນປີ (ຕໍ່)
ນະວັນທີ 30 ມິຖຸນາ 2020

	ບົດອະທິບາຍ ເລກທີ	*30 ມິຖຸນາ 2020 ກີບ*	*31 ທັນວາ 2019 ກີບ*
ໜີ້ສິນ ແລະ ທຶນ			
ໜີ້ສິນໝຸນວຽນ			
ເງິນກູ້ຢືມ	12	10,000,000,000	8,000,000,000
ໜີ້ຕ້ອງສົ່ງການຄ້າ		9,738,482,369	18,325,956,786
ເງິນລ່ວງໜ້າຈາກລູກຄ້າ		152,773,000	152,773,000
ໜີ້ຕ້ອງສົ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງ	24	5,883,015,704	5,899,906,226
ພັນທະອາກອນ	13	5,011,622,154	5,455,580,866
ໜີ້ຕ້ອງສົ່ງໃຫ້ພະນັກງານ		2,625,451,738	4,002,595,690
ຄັງສຳຮອງສະຫວັດດີການ	14	772,428,116	1,504,476,810
ໜີ້ຕ້ອງສົ່ງອື່ນໆ	15	13,709,794,193	13,760,329,808
ລວມໜີ້ສິນໝຸນວຽນ		**47,893,567,274**	**57,101,619,186**
ລວມໜີ້ສິນທັງໝົດ		**47,893,567,274**	**57,101,619,186**
ທຶນ			
ທຶນຈົດທະບຽນທີ່ຖອກແລ້ວ	16	20,002,000,000	20,002,000,000
ສ່ວນເກີນມູນຄ່າຮຸ້ນ		18,385,975,511	18,385,975,511
ຄັງສຳຮອງຕາມລະບຽບການ		7,704,052,546	7,704,052,546
ຄັງສຳຮອງເພື່ອຂະຫຍາຍກິດຈະການ		18,549,465,596	18,549,465,596
(ຂາດທຶນສະສົມ)/ກຳໄລສະສົມ		(11,302,928,611)	4,175,985,552
ລວມທຶນ		**53,338,565,042**	**68,817,479,205**
ລວມໜີ້ສິນ ແລະ ທຶນທັງໝົດ		**101,232,132,316**	**125,919,098,391**

ທ່ານ ຈ່າງ ລີ້
ຜູ້ອຳນວຍການໃຫຍ່

ທ່ານ ວິໄຊ ດວງສະຫວັດ
ຮອງຜູ້ຈັດການຝ່າຍການບັນຊີ - ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

7 ກັນຍາ 2020

ບໍລິສັດ ຊີມັງລາວ ມະຫາຊົນ

ໃບລາຍງານຜົນການດຳເນີນງານສຳລັບໄລຍະຫົກເດືອນຕົ້ນປີ
ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2020

	ບົດອະທິບາຍ ເລກທີ	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2020 ກີບ*	*ສຳລັບໄລຍະຫົກເດືອນຕົ້ນ ປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2019 ກີບ*
ລາຍຮັບຈາກການຂາຍສິນຄ້າ	17	24,837,369,056	46,306,055,514
ຕົ້ນທຶນຈາກການຂາຍ	18	(34,283,556,397)	(50,918,227,122)
ຂາດທຶນຂັ້ນຕົ້ນ		**(9,446,187,341)**	**(4,612,171,608)**
ລາຍໄດ້ຈາກການດຳເນີນງານອື່ນໆ		8,253,210	73,396,350
(ເງິນແຮ)/ເກັບຄືນເງິນແຮສຳລັບບັນຊີໜີ້ທວງຍາກ		(1,108,997,046)	50,111,949
ຕົ້ນທຶນການຂາຍ ແລະ ຈຳໜ່າຍ	19	(994,781,047)	(2,181,430,673)
ລາຍຈ່າຍໃນການດຳເນີນງານ	20	(3,444,696,922)	(4,567,641,056)
ຂາດທຶນຈາກການດຳເນີນງານ		**(14,986,409,146)**	**(11,237,735,038)**
ລາຍຮັບທາງການເງິນ	21	143,503,274	488,608,469
ລາຍຈ່າຍທາງການເງິນ	22	(636,008,291)	(179,012,856)
ຂາດທຶນກ່ອນອາກອນ		**(15,478,914,163)**	**(10,928,139,425)**
ລາຍຈ່າຍອາກອນກຳໄລ	23	-	-
ຂາດທຶນສຸດທິຫຼັງອາກອນພາຍໃນໄລຍະ		**(15,478,914,163)**	**(10,928,139,425)**

ທ່ານ ຈ່າງ ລີ
ຜູ້ອຳນວຍການໃຫຍ່

ທ່ານ ວິໄຊ ດວງສະຫວັດ
ຮອງຜູ້ຈັດການຝ່າຍການບັນຊີ - ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

7 ກັນຍາ 2020

ບໍລິສັດ ຊີມັງລາວ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງສຳລັບໄລຍະຫົກເດືອນຕົ້ນປີ

ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2020

	ທຶນຈົດທະບຽນທີ່ຖອກແລ້ວ *ກີບ*	*ສ່ວນເກີນມູນຄ່າຮຸ້ນ* *ກີບ*	*ຄັງສຳຮອງຕາມລະບຽບການ* *ກີບ*	*ຄັງສຳຮອງເພື່ອຂະຫຍາຍກິດຈະການ* *ກີບ*	*ກຳໄລສະສົມ/(ຂາດທຶນສະສົມ)* *ກີບ*	*ລວມ* *ກີບ*
ນະວັນທີ 1 ມັງກອນ 2019	20,002,000,000	18,385,975,511	7,661,007,370	18,484,897,832	28,006,028,051	92,539,908,764
ຂາດທຶນສຸດທິພາຍໃນໄລຍະ	-	-	-	-	(10,928,139,425)	(10,928,139,425)
ໂອນເປັນຄັງສຳຮອງຕາມລະບຽບການ	-	-	43,045,176	-	(43,045,176)	-
ໂອນເປັນຄັງສຳຮອງອື່ນໆ	-	-	-	64,567,764	(64,567,764)	-
ໂອນເປັນຄັງສຳຮອງສະຫວັດດີການ	-	-	-	-	(43,045,175)	(43,045,175)
ຈ່າຍເງິນປັນຜົນ	-	-	-	-	(1,200,120,000)	(1,200,120,000)
ນະວັນທີ 30 ມິຖຸນາ 2019	**20,002,000,000**	**18,385,975,511**	**7,704,052,546**	**18,549,465,596**	**15,727,110,511**	**80,368,604,164**
ນະວັນທີ 1 ມັງກອນ 2020	20,002,000,000	18,385,975,511	7,704,052,546	18,549,465,596	4,175,985,552	68,817,479,205
ຂາດທຶນສຸດທິພາຍໃນໄລຍະ	-	-	-	-	(15,478,914,163)	(15,478,914,163)
ນະວັນທີ 30 ມິຖຸນາ 2020	**20,002,000,000**	**18,385,975,511**	**7,704,052,546**	**18,549,465,596**	**(11,302,928,611)**	**53,338,565,042**

ທ່ານ ຈ່າງ ລີ້
ຜູ້ອຳນວຍການໃຫຍ່

ທ່ານ ວິໄຊ ດວງສະຫວັດ
ຮອງຜູ້ຈັດການຝ່າຍການບັນຊີ - ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

7 ກັນຍາ 2020

ບໍລິສັດ ຊີມັງລາວ ມະຫາຊົນ

ໃບລາຍງານກະແສເງິນສົດສຳລັບໄລຍະຫົກເດືອນຕົ້ນປີ
ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2020

	ບົດອະທິບາຍ ເລກທີ	*ສຳລັບໄລຍະຫົກເດືອນຕົ້ນ ປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2020 ກີບ*	*ສຳລັບໄລຍະຫົກເດືອນຕົ້ນ ປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2019 ກີບ*
ກະແສເງິນສົດຈາກກິດຈະກຳການດຳເນີນງານ			
ຂາດທຶນກ່ອນອາກອນ		**(15,478,914,163)**	**(10,928,139,425)**
ດັດແກ້ສຳລັບ:			
ຄ່າຫຼຸ້ຍຫ້ຽນຊັບສິນບັດຄົງທີ່ມີຕົວຕົນ	4	4,455,001,229	4,194,711,266
ເງິນແຮ/(ເກັບຄືນເງິນແຮ)ສຳລັບເຄື່ອງໃນສາງ		614,159,861	(209,496,558)
ເງິນແຮ/(ເກັບຄືນເງິນແຮ)ສຳລັບໜີ້ຫວຍຍາກ		1,108,997,046	(50,111,949)
ກຳໄລຈາກກິດຈະກຳການລົງທຶນ	21	(8,120,154)	(275,995,029)
ກຳໄລສຸດທິຈາກອັດຕາແລກປ່ຽນ		51,736,287	(14,748,799)
ລາຍຈ່າຍດອກເບ້ຍ	22	448,888,884	65,555,555
ຂາດທຶນຈາກການດຳເນີນງານກ່ອນການປ່ຽນແປງຂອງທຶນໝຸນວຽນ		**(8,808,251,010)**	**(7,218,224,939)**
ຫຼຸດລົງ/(ເພີ່ມຂຶ້ນ) ຂອງໜີ້ຕ້ອງຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ລວມ ທັ້ງໜີ້ຕ້ອງຮັບຈາກພາກສ່ວນທີ່ກ່ຽວຂ້ອງ		5,603,740,023	(12,887,047,663)
ຫຼຸດລົງຂອງເຄື່ອງໃນສາງ		11,028,038,701	9,844,666,516
ເພີ່ມຂຶ້ນ/(ຫຼຸດລົງ) ຂອງໜີ້ຕ້ອງສົ່ງທາງການຄ້າ ແລະ ໜີ້ຕ້ອງສົ່ງອື່ນ ລວມທັ້ງ ໜີ້ຕ້ອງຮັບຈາກພາກສ່ວນທີ່ກ່ຽວຂ້ອງ		(11,208,051,911)	(514,609,924)
ລາຍຈ່າຍດອກເບ້ຍເງິນກູ້ຢືມ		(448,888,884)	(65,555,555)
ລາຍຈ່າຍອາກອນລາຍໄດ້		-	(396,724,779)
ກະແສເງິນສົດສຸດທິໃຊ້ໃນກິດຈະກຳການດຳເນີນງານ		**(3,833,413,081)**	**(11,237,496,344)**
ກະແສເງິນສົດຈາກກິດຈະກຳການລົງທຶນ			
ຈັດຊື້ຊັບສິນບັດຄົງທີ່ມີຕົວຕົນ		(335,779,600)	(1,022,308,247)
ຮັບຄືນເງິນຝາກມີກຳນົດ		-	12,000,000,000
ລາຍຮັບຈາກດອກເບ້ຍ		8,120,154	682,150,646
ກະແສເງິນສົດສຸດທິ (ໃຊ້ໄປ)/ຈາກ ກິດຈະການການລົງທຶນ		**(327,659,446)**	**11,659,842,399**
ກະແສເງິນສົດຈາກກິດຈະກຳທາງການເງິນ			
ລາຍຈ່າຍເງິນປັນຜົນ		-	(360,036,000)
ເງິນກູ້ຈາກທະນາຄານ		6,000,000,000	4,000,000,000
ຊຳລະເງິນກູ້ທະນາຄານ		(4,000,000,000)	-
ກະແສເງິນສົດສຸດທິຈາກກິດຈະກຳການເງິນ		**2,000,000,000**	**3,639,964,000**
(ຫຼຸດລົງ)/ເພີ່ມຂຶ້ນສຸດທິຂອງເງິນສົດ		(2,161,072,527)	4,062,310,055
ເງິນສົດຕົ້ນໄລຍະ		6,042,043,762	6,249,412,532
ຜົນກະທົບຈາກການປ່ຽນແປງຂອງອັດຕາແລກປ່ຽນ		(51,736,287)	14,748,799
ເງິນສົດທ້າຍໄລຍະ	**11**	**3,829,234,948**	**10,326,471,386**

ທ່ານ ຈ່າງ ລີ
ຜູ້ອຳນວຍການໃຫຍ່

ທ່ານ ວິໄຊ ດວງສະຫວັດ
ຮອງຜູ້ຈັດການຝ່າຍການປັນຊີ - ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

7 ກັນຍາ 2020

ບໍລິສັດ ຊິມັ່ງລາວ ມະຫາຊົນ

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີ
ນະວັນທີ ແລະ ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2020

1. ຂໍ້ມູນບໍລິສັດ

ບໍລິສັດ ຊິມັ່ງລາວ ມະຫາຊົນ ("ບໍລິສັດ"), ກ່ອນໜ້ານີ້ແມ່ນ ບໍລິສັດ ຊິມັ່ງລາວ ຈຳກັດ, ຖືກສ້າງຕັ້ງຂຶ້ນຕາມກົດລະບຽບພາຍໃນຂອງບໍລິສັດທີ່ເຊັນຮັບຮອງ ທີ່ນະຄອນຫຼວງວຽງຈັນ, ສປປ ລາວ ໃນວັນທີ 15 ທັນວາ 1998 ລະຫວ່າງ ລັດວິສາຫະກິດ ພັດ ທະນາກະສິກຳ-ອຸດສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ (DAI) ("ຝ່າຍ ກ") ກັບ ບໍລິສັດຮ່ວມມືສາກົນດ້ານເສດຖະກິດ-ເຕັກນິກຢຸນນານ ສປ ຈີນ (CYC) ("ຝ່າຍ ຂ").

ວັນທີ 6 ທັນວາ 1999, ບໍລິສັດໄດ້ຮັບໃບທະບຽນຄັ້ງທຳອິດເລກທີ 1154/ຈທກ ອອກໂດຍ ກະຊວງອຸດສະຫະກຳ ແລະ ການຄ້າ, ເຊິ່ງບໍລິສັດໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດກ່ຽວກັບຊິມັ່ງ ແລະ ຜະລິດຕະພັນຕ່າງໆທີ່ກ່ຽວຂ້ອງກັບຊິມັ່ງ ເພື່ອການຈຳໜ່າຍພາຍໃນ ແລະ ສົ່ງອອກ.

ບໍລິສັດໄດ້ມີການປັບປຸງໃບທະບຽນວິສາຫະກິດດັ່ງລຸ່ມນີ້:

ໃບທະບຽນວິສາຫະກິດ	*ວັນທີ*
0078/ຈທກ	5 ເມສາ 2006
1719/ຈທກ	26 ກຸມພາ 2009
0244/ຈທກ	20 ກຸມພາ 2012
1436/ຈທກ	15 ພະຈິກ 2012
791/ຈທກ	13 ພະຈິກ 2015
1016/ຈທກ	5 ທັນວາ 2016
0247/ຈທກ	24 ມິນາ 2017
0688/ຈທກ	2 ສິງຫາ 2017
0160/ຈທກ	20 ກຸມພາ 2018

ພາຍໃນໄລຍະ, ກິດຈະກຳຫຼັກທີ່ດຳເນີນໂດຍບໍລິສັດແມ່ນມີດັ່ງນີ້:

- ຜະລິດຊິມັ່ງ ແລະ ຜະລິດຕະພັນອື່ນໆທີ່ກ່ຽວຂ້ອງກັບຊິມັ່ງ;
- ຂາຍສົ່ງ ແລະ ຂາຍຍ່ອຍຊິມັ່ງ ແລະ ຜະລິດຕະພັນອື່ນໆທີ່ກ່ຽວຂ້ອງກັບຊິມັ່ງສຳລັບການບໍລິໂພກພາຍໃນ ແລະ ສົ່ງອອກ.

ສຳນັກງານໃຫຍ່ທີ່ໄດ້ລົງທະບຽນຂອງບໍລິສັດຕັ້ງຢູ່ ຖະໜົນໜອງບອນ, ບ້ານໜອງບອນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ. ບໍລິສັດຍັງມີໂຮງງານຊິມັ່ງອ້ວງວຽງ ຫຼັງ 2 ຢູ່ເມືອງອ້ວງວຽງ, ແຂວງວຽງຈັນ, ສປປ ລາວ.

ນະວັນທີ 31 ມິຖຸນາ 2020 ບໍລິສັດມີພະນັກງານ 261 ຄົນ (31 ທັນວາ 2019: ພະນັກງານ 318 ຄົນ).

ບໍລິສັດໄດ້ຢຸດກິດຈະກຳການຜະລິດທັງໝົດຊົ່ວຄາວຕັ້ງແຕ່ເດືອນ ເມສາ 2020 ຈົນເຖິງວັນທີຂອງບົດລາຍງານນີ້ສະບັບນີ້.

2. ພື້ນຖານການກະກຽມ

ເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີຂອງບໍລິສັດ ແມ່ນໄດ້ຖືກກະກຽມໂດຍນຳໃຊ້ຫຼັກການຕົ້ນທຶນເດີມ. ເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີສະບັບນີ້ແມ່ນໄດ້ຖືກລາຍງານເປັນສະກຸນເງິນກີບລາວ ("ກີບ") ເຊິ່ງເປັນສະກຸນເງິນຫຼັກທີ່ນຳໃຊ້ໃນການດຳເນີນທຸລະກິດຂອງບໍລິສັດ.

ເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີຂອງບໍລິສັດ ແມ່ນໄດ້ຖືກກະກຽມໂດຍສອດຄ່ອງກັບນະໂຍບາຍການບັນຊີເຊິ່ງໄດ້ລະບຸໄວ້ໃນບົດອະທິບາຍເລກທີ 3. ນະໂຍບາຍການບັນຊີດັ່ງກ່າວບໍ່ໄດ້ມີວັດຖຸປະສົງໃນການນຳສະເໜີຖານະການເງິນສຳລັບໄລຍະຫົກເດືອນຕົ້ນປີ, ຜົນຂອງການດຳເນີນງານສຳລັບໄລຍະຫົກເດືອນຕົ້ນປີ ແລະ ກະແສເງິນສົດສຳລັບໄລຍະຫົກເດືອນຕົ້ນປີຂອງບໍລິສັດຕາມຫຼັກການບັນຊີສາກົນທີ່ຖືກຍອມຮັບໂດຍທົ່ວໄປ.

ຄວາມສືບເນື່ອງຂອງການດຳເນີນທຸລະກິດ

ບໍລິສັດໄດ້ຂາດທຶນສຸດທິມູນຄ່າ 15 ຕື້ກີບ ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2020. ນະວັນທີດັ່ງກ່າວ , ບໍລິສັດມີຂາດທຶນສະສົມມູນຄ່າ 11 ຕື້ກີບ. ເນື່ອງຈາກຜົນກະທົບຂອງມາດຕະການປ້ອງກັນການແຜ່ລະບາດຂອງພະຍາດໂຄວິດ 19 ໂດຍລັດຖະບານ ສປປ ລາວ ແລະ ບັນຫາທາງດ້ານເສດຖະກິດ, ບໍລິສັດໄດ້ຢຸດການຜະລິດທັງໝົດຊົ່ວຄາວຕັ້ງແຕ່ເດືອນ ເມສາ 2020. ເງື່ອນໄຂດັ່ງກ່າວນີ້ໄດ້ຊີ້ໃຫ້ເຫັນຄວາມບໍ່ແນ່ນອນທີ່ມີຄວາມສຳຄັນ ເຊິ່ງອາດເກີດຂໍ້ສົງໄສຢ່າງໃຫຍ່ຫຼວງກ່ຽວກັບຄວາມສາມາດໃນການສືບເນື່ອງໃນການດຳເນີນທຸລະກິດຂອງບໍລິສັດ.

ຄະນະບໍລິຫານຂອງບໍລິສັດໄດ້ປຶກສາຫາລືກັບຂາຮຸ້ນຫຼັກໃນການພັດທະນາແຜນດຳເນີນທຸລະກິດທີ່ເໝາະສົມ ອີງຕາມການຄາດຄະເນວ່າ ບໍລິສັດສາມາດກັບຄືນມາດຳເນີນການຫຼັງຈາກການຊອກຫານັກລົງທຶນໃໝ່ ແລະ/ຫຼືການປັບປຸງໂຄງສ້າງກິດຈະກຳຂອງບໍລິສັດພາຍໃນ 12 ເດືອນຂ້າງໜ້ານັບຈາກວັນທີຂອງໃບລາຍງານຖານະການເງິນສຳລັບໄລຍະຫົກເດືອນຕົ້ນປີ. ນະວັນທີຂອງບົດລາຍງານສະບັບນີ້, ການປຶກສາຫາລື ແລະ ແຜນດຳເນີນທຸລະກິດແມ່ນຍັງບໍ່ທັນສຳເລັດ. ໃນພື້ນຖານດັ່ງກ່າວ, ຄະນະບໍລິຫານຂອງບໍລິສັດ ພິຈາລະນາວ່າ ບໍລິສັດຍັງເໝາະສົມທີ່ຈະກະກຽມເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີຂອງບໍລິສັດບົນພື້ນຖານການສືບເນື່ອງໃນການດຳເນີນທຸລະກິດ.

ເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີ ແມ່ນບໍ່ໄດ້ລວມລາຍການດັດແກ້ຂອງ ຊັບສິນ ແລະ ໜີ້ສິນ ທີ່ອາດຈະຈຳເປັນ ຖ້າຫາກ ບໍລິສັດບໍ່ມີຄວາມສາມາດໃນການສືບເນື່ອງໃນການດຳເນີນທຸລະກິດ.

ປີການບັນຊີ

ປີການບັນຊີຂອງບໍລິສັດແມ່ນ ເລີ່ມຈາກ ວັນທີ 1 ມັງກອນ ແລະ ສິ້ນສຸດ ວັນທີ 31 ທັນວາ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ

ຊັບສິນບັດຄົງທີ່ມີຕົວຕົນ

ຊັບສິນບັດຄົງທີ່ມີຕົວຕົນແມ່ນບັນທຶກຕາມມູນຄ່າຕົ້ນທຶນລົບໃຫ້ຄ່າຫຼ້ຽຫ້ຽນສະສົມ.

ຕົ້ນທຶນຂອງຊັບສິນບັດຄົງທີ່ມີຕົວຕົນທີ່ຊື້ໂດຍບໍລິສັດ ເຊິ່ງປະກອບດ້ວຍລາຄາຊື້ ແລະ ທຸກຄ່າໃຊ້ຈ່າຍທີ່ຕິດພັນໂດຍກົງທີ່ເກີດຂຶ້ນໃນການເຮັດໃຫ້ຊັບສິນໃຫ້ຢູ່ໃນສະພາບທີ່ສາມາດໃຊ້ງານຕາມຈຸດປະສົງຂອງການນຳໃຊ້. ລາຍຈ່າຍສຳລັບການເພີ່ມເຕີມ, ການປັບປຸງ ແລະ ການຟື້ນຟູແມ່ນບັນທຶກເຂົ້າໃນມູນຄ່າຕົ້ນທຶນໃນຂະນະທີ່ລາຍຈ່າຍສຳລັບການບຳລຸງຮັກສາ ແລະ ການສ້ອມແປງແມ່ນບັນທຶກເຂົ້າໃນໃບລາຍງານຜົນການດຳເນີນງານສຳລັບໄລຍະຫົກເດືອນຕົ້ນປີ.

ເມື່ອຊັບສິນບັດຄົງທີ່ມີຕົວຕົນໄດ້ຖືກຂາຍ ຫຼື ສະສາງ, ຕົ້ນທຶນ ແລະ ຄ່າຫຼ້ຽຫ້ຽນສະສົມ ແມ່ນຈະຖືກຕັດອອກຈາກໃບລາຍງານຖານະການເງິນສຳລັບໄລຍະຫົກເດືອນຕົ້ນປີ ແລະ ທຸກໆກຳໄລ ຫຼື ຂາດທຶນຈາກການສະສາງ ແມ່ນຈະຖືກລວມຢູ່ໃນລາຍຮັບການດຳເນີນງານອື່ນໆ ຫຼື ບັນຊີລາຍຈ່າຍ ໃນໃບລາຍງານຜົນການດຳເນີນງານສຳລັບໄລຍະຫົກເດືອນຕົ້ນປີຕາມລຳດັບ.

ຊັບສິນພວມກໍ່ສ້າງ ສະແດງເຖິງຊັບສິນພາຍໃຕ້ການກໍ່ສ້າງ ເຊິ່ງປະກອບມີຄ່າໃຊ້ຈ່າຍໃນການກໍ່ສ້າງ ແລະ ຄ່າໃຊ້ຈ່າຍໂດຍກົງອື່ນໆ.

ຊັບສິນທີ່ຖືກຫັກຄ່າຫຼ້ຽຫ້ຽນໝົດຕາມອາຍຸການນຳໃຊ້ຈະຖືກເກັບຮັກສາໄວ້ໃນບັນຊີ ຈົນກວ່າຈະບໍ່ມີການນຳໃຊ້ ແລະ ຈະບໍ່ມີຄ່າຫຼ້ຽຫ້ຽນ ແລະ ຄ່າເສື່ອມມູນຄ່າເພີ່ມເຕີມໃດໆ ທີ່ຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານສຳລັບໄລຍະຫົກເດືອນຕົ້ນປີອີກ.

ຄ່າຫຼ້ຽຫ້ຽນ

ການຫັກຄ່າຫຼ້ຽຫ້ຽນຂອງຊັບສິນບັດຄົງທີ່ມີຕົວຕົນ ແມ່ນນຳໃຊ້ວິທີຄິດໄລ່ແບບສະເໝີຕົ້ນຕາມອາຍຸການນຳໃຊ້ຂອງຊັບສິນແຕ່ລະປະເພດດັ່ງນີ້:

ອາຄານ ແລະ ສິ່ງປຸກສ້າງ	5 ຫາ 20 ປີ
ເຄື່ອງຈັກ ແລະ ອຸປະກອນ	5 ປີ
ພາຫະນະຂົນສົ່ງ	5 ປີ
ການປັບປຸງສິດທິໃນການເຊົ່າ	5 ຫາ 10 ປີ
ເຄື່ອງໃຊ້ຫ້ອງການ	5 ຫາ 10 ປີ
ຊັບສິນອື່ນໆ	10 ປີ

ອາຍຸການນຳໃຊ້ຂອງການປັບປຸງສິດທິໃນການເຊົ່າ ແມ່ນຖືກກຳນົດຕາມການຄາດຄະເນຄວາມຄາດຫ້ອງການນຳໃຊ້ຂອງຄະນະບໍລິຫານ ແລະ ອາດຈະຕ່າງຈາກໄລຍະການສິດທິໃນການເຊົ່າ.

ການຫັກຄ່າຫຼ້ຽຫ້ຽນຂອງຊັບສິນບັດຄົງທີ່ມີຕົວຕົນທີ່ຊື້ເພີ່ມ ແລະ ສະສາງອອກພາຍໃນໄລຍະ ແມ່ນຄິດໄລ່ອີງຕາມສັດສ່ວນຊຶ່ງອ້າງອີງເຖິງເດືອນທີ່ຊື້ເຂົ້າ ແລະ ສະສາງອອກຕົວຈິງ. ສຳລັບຊັບສິນພວມກໍ່ສ້າງແມ່ນ ບໍ່ມີການຫັກຄ່າຫຼ້ຽຫ້ຽນຈົນກວ່າຈະເຖິງເວລາທີ່ຊັບສິນດັ່ງກ່າວສຳເລັດ ແລະ ຖືກນຳໃຊ້.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

ຊັບສິນບັດຄົງທີທີ່ບໍ່ມີຕົວຕົນ

ຊັບສິນບັດຄົງທີທີ່ບໍ່ມີຕົວຕົນ ໝາຍເຖິງສິດໃນການນຳໃຊ້ທີ່ດິນທີ່ບໍ່ກຳນົດໄລຍະເວລາການນຳໃຊ້ ແລະ ຖືກລາຍງານໃນມູນຄ່າຕົ້ນທຶນ. ຕົ້ນທຶນຂອງສິດໃນການນຳໃຊ້ທີ່ດິນ ເຊິ່ງປະກອບດ້ວຍ ລາຄາຊື້ ແລະ ຕົ້ນທຶນໂດຍກົງຕ່າງໆແມ່ນຈະບໍ່ມີການຫັກຄ່າເສື່ອມ.

ຊັບສິນບໍ່ໝຸນວຽນອື່ນໆ

ຊັບສິນທີ່ຖືກຈັດຊື້, ຄຸ້ມຄອງ ແລະ ນຳໃຊ້ໂດຍບໍລິສັດ ເຊິ່ງອອກຊື່ພາຍໃຕ້ຊື່ຂອງພາກສ່ວນກ່ຽວຂ້ອງອື່ນ ແມ່ນຈະລາຍງານເປັນຊັບສິນບໍ່ໝຸນວຽນອື່ນໆຂອງບໍລິສັດ. ຄ່າຫຼ້ຍຫຼັ້ງແມ່ນຖືກຄິດໄລ່ ແບບສະເໜີຕົວຕາມອາຍຸການນຳໃຊ້ຕະຫຼອດໄລຍະ 20 ປີ.

ເຄື່ອງໃນສາງ

ເຄື່ອງໃນສາງແມ່ນຖືກສະແດງໃນມູນຄ່າທີ່ຕ່ຳກວ່າຕົ້ນທຶນທີ່ເກີດຂຶ້ນໃນການນຳເອົາເຄື່ອງໃນສາງມາຢູ່ໃນສະຖານທີ່ ແລະ ສະພາບໃນປັດຈຸບັນ ແລະ ຖືກຮັບຮູ້ຕາມມູນຄ່າທີ່ແທ້ຈິງສຸດທິ.

ມູນຄ່າທີ່ແທ້ຈິງສຸດທິ ສະແດງເຖິງລາຄາທີ່ຄາດວ່າຈະຂາຍຕາມເງື່ອນໄຂທາງທຸລະກິດທົ່ວໄປ ລົບຄ່າໃຊ້ຈ່າຍຄາດຄະເນ ທີ່ຈະເຮັດໃຫ້ເປັນສິນຄ້າສຳເລັດຮູບ ແລະ ຄ່າໃຊ້ຈ່າຍຄາດຄະເນທີ່ເກີດຂຶ້ນຈາກການຂາຍ.

ລະບົບການຕິດຕາມສາງເປັນໄລຍະ ແມ່ນຖືກນຳໃຊ້ໃນການບັນທຶກເຄື່ອງໃນສາງເຊິ່ງຖືກຕີມູນຄ່າດັ່ງຕໍ່ໄປນີ້:

ວັດຖຸດິບ ສິນຄ້າກຳລັງຜະລິດ ແລະ ສິນຄ້າສຳເລັດຮູບ	- ຕົ້ນທຶນຈັດຊື້ ຄິດໄລ່ຕາມການຕົ້ນທຶນສະເລ່ຍຖ່ວງໜັກ. - ຕົ້ນທຶນຂອງວັດຖຸດິບ ແລະ ຄ່າແຮງງານທາງກົງບວກກັບຄ່າໃຊ້ຈ່າຍໃນການຜະລິດໂດຍອີງໃສ່ຄວາມສາມາດປະຕິບັດງານປົກກະຕິ ບົນພື້ນຖານມູນຄ່າຕົ້ນທຶນສະເລ່ຍຖ່ວງໜັກ.

ເງິນແຮສຳລັບຄ່າເສື່ອມມູນຄ່າເຄື່ອງໃນສາງ

ເງິນແຮສຳລັບຄ່າເສື່ອມມູນຄ່າເຄື່ອງໃນສາງແມ່ນເກີດຈາກການປະເມີນການສູນເສຍທີ່ເກີດຂຶ້ນຍ້ອນການເສື່ອມມູນຄ່າ (ເກີດຈາກການຫຼຸດລົງ, ຄວາມເສຍຫາຍ, ການລ້າສະໄໝ ແລະ ອື່ນໆ) ຂອງເຄື່ອງໃນສາງ ໂດຍປະເມີນຕາມຫລັກຖານທີ່ເໝາະສົມຂອງການເສື່ອມມູນຄ່າທີ່ມີຢູ່ນະວັນທີຂອງໃນລາຍງານຖານະການເງິນສຳລັບໄລຍະຫົກເດືອນຕົ້ນປີ.

ການເພີ່ມຂຶ້ນ ແລະ ຫຼຸດລົງຂອງຍອດເງື່ອເງິນແຮແມ່ນບັນທຶກເຂົ້າຕົ້ນທຶນຈາກການຂາຍ ແລະ ການຈຳໜ່າຍ ສະແດງໃນໃບລາຍງານຜົນການດຳເນີນງານສຳລັບໄລຍະຫົກເດືອນຕົ້ນປີ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

ໜີ້ຕ້ອງຮັບການຄ້າ ແລະ ເງິນແຮສຳລັບບັນຊີໜີ້ທວງຍາກ

ໜີ້ຕ້ອງຮັບການຄ້າ ແມ່ນສະແດງຕາມມູນຄ່າລວມສຸດທິຂອງ ໜີ້ຕ້ອງຮັບການຄ້າ ແລະ ເງິນແຮໜີ້ທວງຍາກ.

ເງິນແຮສຳລັບບັນຊີໜີ້ທວງຍາກ ສະແດງເຖິງມູນຄ່າຍອດຄົງເຫຼືອຂອງໜີ້ຕ້ອງຮັບ ນະວັນທີຂອງໃບລາຍງານຖານະການເງິນ ເຊິ່ງເກີດຂໍ້ສົງໃສໃນການເກັບກູ້ຄືນມາ.

ເງິນແຮໜີ້ຕ້ອງຮັບທວງຍາກສຳລັບໜີ້ຕ້ອງຮັບການຄ້າ ແມ່ນອີງຕາມຈຳນວນມື້ການກຳນົດຂອງໜີ້ຕ້ອງຮັບການຄ້າດັ່ງລຸ່ມນີ້:

ໄລຍະການກຳນົດ	*ອັດຕາເງິນແຮ*
6 ເດືອນ ຫາ 1 ປີ	30%
1 ປີ ຫາ 2 ປີ	50%
ຫຼາຍກວ່າ 2 ປີ	100%

ການເພີ່ມຂຶ້ນ ແລະ ຫຼຸດລົງຂອງຍອດເງິນແຮແມ່ນຖືກບັນທຶກເປັນເງິນແຮໜີ້ທວງຍາກໃນໃບລາຍງານຜົນການດຳເນີນງານສຳລັບໄລຍະຫົກເດືອນຕົ້ນປີ.

ເງິນສົດ

ເງິນສົດປະກອບດ້ວຍເງິນສົດໃນຄັງ ແລະ ເງິນຝາກທະນາຄານ.

ຕົ້ນທຶນເງິນກູ້

ຕົ້ນທຶນເງິນກູ້ ປະກອບດ້ວຍດອກເບ້ຍ ແລະ ລາຍຈ່າຍອື່ນໆທີ່ເກີດຂຶ້ນ ເຊິ່ງກ່ຽວຂ້ອງກັບການກູ້ຢືມເງິນທຶນ. ຕົ້ນທຶນເງິນກູ້ ແມ່ນຖືກບັນທຶກເປັນລາຍຈ່າຍພາຍໃນໄລຍະທີ່ລາຍຈ່າຍດັ່ງກ່າວເກີດຂຶ້ນ.

ໜີ້ຕ້ອງສົ່ງທາງການຄ້າ, ລາຍຈ່າຍຄ້າງຈ່າຍ ແລະ ໜີ້ຕ້ອງສົ່ງອື່ນໆ

ໜີ້ຕ້ອງສົ່ງ ແລະ ລາຍຈ່າຍຄ້າງຈ່າຍ ຈະຖືກຮັບຮູ້ເປັນຈຳນວນທີ່ຕ້ອງຈ່າຍໃນອະນາຄົດສຳລັບສິນຄ້າ ແລະ ການບໍລິການທີ່ໄດ້ຮັບ, ບໍ່ວ່າໃບເກັບເງິນຈະຖືກສົ່ງ ຫຼື ຍັງບໍ່ສົ່ງໃຫ້ບໍລິສັດກໍ່ຕາມ.

ທຶນຈົດທະບຽນທີ່ຖອກແລ້ວ

ທຶນຈົດທະບຽນທີ່ຖອກແລ້ວ ຈະຖືກຮັບຮູ້ໃນໃບລາຍງານຖານະການເງິນເມື່ອໄດ້ຮັບເງິນຈາກຂາຮຸ້ນ ໃນກໍລະ ນີທີ່ຖອກທຶນຈົດທະບຽນເປັນເງິນສົດ ຫຼື ເມື່ອມີການອະນຸມັດຈາກຂາຮຸ້ນໃນກໍລະນີທີ່ທຶນຈົດທະບຽນບໍ່ແມ່ນເງິນສົດ ແລະ ໃບຢັ້ງຢືນຮຸ້ນຖືກອອກໃຫ້. ທຸກໆທຶນຈົດທະບຽນທີ່ຍັງບໍ່ທັນຖອກໂດຍອີງຕາມກົດລະບຽບຂອງບໍລິສັດ, ໃບທະບຽນວິສາ ຫະກິດ ແລະ ໃບທະບຽນອາກອນແມ່ນບໍ່ໄດ້ຖືກຮັບຮູ້ໃນໃບລາຍງານຖານະການເງິນສຳລັບໄລຍະຫົກເດືອນຕົ້ນປີ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

ສ່ວນເກີນມູນຄ່າຮຸ້ນ

ສ່ວນເກີນມູນຄ່າຮຸ້ນຖືກຮັບຮູ້ເວລາມີການອອກຮຸ້ນເພີ່ມ,ນະມູນຄ່າສ່ວນເກີນລະຫວ່າງລາຄາສະເໜີຂາຍຂອງຮຸ້ນທີ່ອອກເພີ່ມ ແລະ ມູນຄ່າໜ້າບັດ, ຫຼັງຈາກຫັກຕົ້ນທຶນຕ່າງໆທີ່ກ່ຽວຂ້ອງກັບການອອກຮຸ້ນ (ເຊັ່ນ: ຄ່າທຳນຽມການຄ້ຳປະກັນການອອກຮຸ້ນ ແລະ ລາຍຈ່າຍຕ່າງໆທີ່ກ່ຽວຂ້ອງໃນການຕີມູນຄ່າ, ລາຍຈ່າຍຄ່າທີ່ປຶກສາ).

ຄັງສຳຮອງ

ອີງຕາມກົດໝາຍວິສາຫະກິດ ເລກທີ 46/ສພຊ ລົງວັນທີ 26 ທັນວາ 2013, ບໍລິສັດມະຫາຊົນຖືກຮຽກຮ້ອງໃຫ້ມີການຫັກກຳໄລສຸດທິຕາມຈຳນວນທີ່ເໝາະສົມເຂົ້າເປັນຄັງແຮຕາມລະບຽບການ.

ຄັງແຮຕາມລະບຽບການເປັນຄັງສຳຮອງເພື່ອຮັບປະກັນຄວາມສ່ຽງທີ່ຈະເກີດຂຶ້ນ, ເຊິ່ງ 10% ຂອງກຳໄລສຸດທິຈະຖືກຫັກເຂົ້າໃນຄັງສຳຮອງດັ່ງກ່າວ, ຫຼັງຈາກຫັກຂາດທຶນສະສົມ. ເມື່ອຄັງແຮດັ່ງກ່າວຫາກມີເງິນສະສົມໄດ້ເຄິ່ງໜຶ່ງຂອງທຶນຈົດທະບຽນ, ບໍລິສັດ ອາດຈະໂຈະການຫັກກຳໄລເຂົ້າຄັງແຮດັ່ງກ່າວ, ເວັ້ນເສຍແຕ່ໄດ້ຮັບອະນຸມັດຈາກເຈົ້າຂອງບໍລິສັດ.

ຄັງແຮອື່ນໆປະກອບມີ ຄັງສຳຮອງສະຫວັດດີການ ແລະ ຄັງສຳຮອງເພື່ອຂະຫຍາຍກິດຈະການເຊິ່ງຫັກຈາກກຳໄລສະສົມຕາມຄວາມເໝາະສົມອີງຕາມກົດລະບຽບພາຍໃນຂອງບໍລິສັດ ລົງວັນທີ 15 ທັນວາ ປີ 1998. ອັດຕາເງິນແຮທີ່ເໝາະສົມຈະຖືກພິຈາລະນາໂດຍສະພາອຳນວຍການຂອງບໍລິສັດໃນແຕ່ລະປີ.

ຄັງແຮຂອງປີການບັນຊີປັດຈຸບັນຖືກຫັກຈາກກຳໄລສຸດທິຂອງປີຜ່ານມາຕາມການອະນຸມັດໃນກອງປະຊຸມຂາຮຸ້ນປະຈຳປີ.

ເງິນຕາຕ່າງປະເທດ

ເອກະສານລາຍງານເງິນ ຖືກລາຍງານເປັນສະກຸນເງິນກີບລາວ ເຊິ່ງເປັນສະກຸນເງິນທີ່ບໍລິສັດໃຊ້ໃນການເຄື່ອນໄຫວ ແລະ ລາຍງານ. ບັນດາລາຍການເຄື່ອນໄຫວທີ່ເປັນສະກຸນເງິນອື່ນໆນອກເໜືອຈາກສະກຸນເງິນກີບ ແມ່ນຈະຖືກບັນທຶກໃນເບື້ອງຕົ້ນໂດຍໃຊ້ອັດຕາແລກປ່ຽນໃນມື້ທີ່ລາຍການເຄື່ອນໄຫວເກີດຂຶ້ນ. ຊັບສິນ ແລະ ໜີ້ສິນທາງການເງິນທີ່ເປັນສະກຸນເງິນຕ່າງປະເທດ ແມ່ນຈະຖືກປ່ຽນເປັນເງິນກີບ ໂດຍນຳໃຊ້ອັດຕາແລກປ່ຽນໃນມື້ຂອງໃບລາຍງານຖານະການເງິນສຳລັບໄລຍະຫົກເດືອນຕົ້ນປີ . ກຳໄລ ແລະ ຂາດທຶນທັງໝົດຈະຖືກບັນທຶກເປັນລາຍຮັບທາງການເງິນ ແລະ ລາຍຈ່າຍທາງການເງິນຕາມລຳດັບໃນໃບລາຍງານຜົນການດຳເນີນງານສຳລັບໄລຍະຫົກເດືອນຕົ້ນປີ.

ການຮັບຮູ້ລາຍຮັບ

ລາຍຮັບຈະຖືກຮັບຮູ້ ເມື່ອມີຄວາມເປັນໄປໄດ້ວ່າ ຜົນປະໂຫຍດທາງດ້ານເສດຖະກິດຈະໄດ້ຮັບໂດຍບໍລິສັດ ແລະ ລາຍຮັບດັ່ງກ່າວຕ້ອງສາມາດວັດແທກໄດ້ຢ່າງສົມເຫດສົມຜົນ. ລາຍຮັບຈະຖືກວັດແທກດ້ວຍມູນຄ່າຍຸດຕິທຳຂອງລາຍຮັບ ຫຼື ໜີ້ຕ້ອງຮັບທີ່ຖືກພິຈາລະນາ, ໂດຍບໍ່ລວມສ່ວນຫຼຸດທາງການຄ້າ, ການສົ່ງຄືນ ແລະ ການຮັບສິນຄ້າຄືນ. ເງື່ອນໄຂສະເພາະໃນການຮັບຮູ້ດັ່ງຕໍ່ໄປນີ້ຕ້ອງສອດຄ່ອງກ່ອນລາຍຮັບຈະຖືກຮັບຮູ້:

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

ການຮັບຮູ້ລາຍຮັບ (ຕໍ່)

ການຂາຍສິນຄ້າ

ລາຍຮັບຈະຖືກຮັບຮູ້ເມື່ອຄວາມສ່ຽງອັນໃຫຍ່ຫຼວງ ແລະ ຜົນຕອບແທນຂອງການເປັນເຈົ້າຂອງຕໍ່ສິນຄ້າໄດ້ຖືກໂອນຜ່ານໄປຍັງຜູ້ຊື້, ໂດຍທົ່ວໄປ ແມ່ນອີງຕາມການຂົນສົ່ງສິນຄ້າ.

ດອກເບ້ຍ

ລາຍຮັບຈະຖືກຮັບຮູ້ເມື່ອມີດອກເບ້ຍຄ້າງຮັບ (ໂດຍຄຳນຶງເຖິງປະສິດທິພາບຂອງຊັບສິນ) ເວັ້ນເສຍແຕ່ວ່າມີຂໍ້ສົງໄສໃນການເກັບໜີ້.

ອາກອນ

ອາກອນກຳໄລ ແມ່ນການຄາດຄະເນໜີ້ຕ້ອງສົ່ງອາກອນ ຕາມກຳໄລທີ່ຕ້ອງເສຍອາກອນພາຍໃນໄລຍະ, ໂດຍນຳໃຊ້ອັດຕາອາກອນກຳໄລທີ່ປະກາດໃຊ້ນະມື້ຂອງໃບລາຍງານຖານະການເງິນ ແລະ ນຳໃຊ້ໃນໄລຍະຂອງການນຳໃຊ້ບົດລາຍງານ ແລະ ທຸກໆການດັດແກ້ຂອງໜີ້ຕ້ອງສົ່ງອາກອນກຳໄລຂອງປີທີ່ຜ່ານມາ.

ໜີ້ຕ້ອງສົ່ງອາກອນອື່ນໆ ປະກອບມີ ອາກອນມູນຄ່າເພີ່ມ ແລະ ອາກອນລາຍໄດ້ຂອງພະນັກງານ.

ອາກອນມູນຄ່າເພີ່ມ ແມ່ນອາກອນທີ່ຕ້ອງຈ່າຍໂດຍກຳນົດຈາກລາຍຮັບສຳລັບໄລຍະທີ່ມີການຄິດໄລ່ ໂດຍນຳໃຊ້ອັດຕາອາກອນທີ່ເໝາະສົມໃນແຕ່ລະໄລຍະ.

ອາກອນລາຍໄດ້ ແມ່ນອາກອນທີ່ຕ້ອງຈ່າຍໃນມູນຄ່າເງິນເດືອນທີ່ຈ່າຍໃຫ້ພະນັກງານຂອງໄລຍະດັ່ງກ່າວ ເຊິ່ງຄິດໄລ່ໂດຍນຳໃຊ້ອັດຕາອາກອນທີ່ເໝາະສົມໃນແຕ່ລະໄລຍະ.

ທຸກໆການດັດແກ້ທີ່ກ່ຽວກັບມູນຄ່າຂອງອາກອນຕ້ອງຈ່າຍຂອງປີທີ່ຜ່ານມາ ເຊິ່ງມີຜົນມາຈາກການໄລ່ລຽງອາກອນຂອງເຈົ້າໜ້າທີ່ສ່ວຍສາອາກອນແມ່ນໄດ້ບັນທຶກໂດຍກົງໃນກຳໄລສະສົມ.

ລາຍການເຄື່ອນໄຫວຂອງພາກສ່ວນທີ່ກ່ຽວຂ້ອງ

ພາກສ່ວນຕ່າງໆຖືກພິຈາລະນາເປັນພາກສ່ວນທີ່ກ່ຽວຂ້ອງ ຖ້າພາກວ່າ ພາກສ່ວນດັ່ງກ່າວມີຄວາມສາມາດໃນການຄວບຄຸມ ຫຼື ມີອິດທິພົນທີ່ສຳຄັນຕໍ່ກັນ ໃນການຕັດສິນໃຈທາງດ້ານການເງິນ ແລະ ການດຳເນີນງານ ຫຼື ຢູ່ພາຍໃຕ້ການຄວບຄຸມຮ່ວມກັນ ຫຼື ມີອິດທິພົນທີ່ສຳຄັນຮ່ວມກັນ.

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງແມ່ນເກີດຂຶ້ນໂດຍອີງຕາມລາຄາຕະຫຼາດ ຫຼື ອີງຕາມການເຫັນດີ ແລະ ຕົກລົງກັນຕາມສັນຍາໃນກໍລະນີທີ່ບໍ່ມີລາຄາຕະຫຼາດ.

4. ຊັບສິນຄົງທີ່ມີຕົວຕົນ

	ອາຄານ ແລະ ສິ່ງປຸກສ້າງ	*ເຄື່ອງຈັກ ແລະ ອຸປະກອນ*	*ພາຫະນະຂົນສົ່ງ*	*ການປັບປຸງສິດທິໃນການເຊົ່າ*	*ເຄື່ອງໃຊ້ຫ້ອງການ*	*ຊັບສິນອື່ນໆ*	*ລວມ*
	ກີບ	*ກີບ*	*ກີບ*	*ກີບ*	*ກີບ*	*ກີບ*	*ກີບ*
ຕົ້ນທຶນ							
ນະວັນທີ 31 ທັນວາ 2019	134,382,315,687	213,077,367,762	21,688,472,198	1,850,717,263	2,088,589,576	436,983,816	373,524,446,302
ຮັບເຂົ້າໃນໄລຍະ	-	-	-	-	-	-	-
ນະວັນທີ 30 ມິຖຸນາ 2020	134,382,315,687	213,077,367,762	21,688,472,198	1,850,717,263	2,088,589,576	436,983,816	373,524,446,302
ຄ່າຫຼ້ຍຫ້ຽນສະສົມ							
ນະວັນທີ 31 ທັນວາ 2019	115,962,932,936	210,073,876,847	19,455,518,435	1,581,243,467	2,034,396,706	436,983,816	349,544,952,207
ຫັກຄ່າຫຼ້ຍຫ້ຽນໃນໄລຍະ	3,293,560,332	862,829,660	212,121,970	41,918,221	44,571,046	-	4,455,001,229
ນະວັນທີ 30 ມິຖຸນາ 2020	119,256,493,268	210,936,706,507	19,667,640,405	1,623,161,688	2,078,967,752	436,983,816	353,999,953,436
ມູນຄ່າຕາມບັນຊີສຸດທິ							
ວັນທີ 31 ທັນວາ 2019	18,419,382,751	3,003,490,915	2,232,953,763	269,473,796	54,192,870	-	23,979,494,095
ວັນທີ 30 ມິຖຸນາ 2020	15,125,822,419	2,140,661,255	2,020,831,793	227,555,575	9,621,824	-	19,524,492,866

ຊັບສິນຄົງທີຂອງບໍລິສັດທັງໝົດ ແມ່ນນຳໄປໃຊ້ເປັນຫຼັກຊັບຄ้ำປะกันการกู้ยืมตามที่เปิดเผยในบิดอะทิบาย เลขที่ 12.

5. ຊັບສິນພວມກໍ່ສ້າງ

	30 ມິຖຸນາ 2020 *ກີບ*	*31 ທັນວາ 2019* *ກີບ*
ໂຄງການຂຸດຄົ້ນບໍ່ແຮ່ ຄອນພຸກ	5,056,286,406	4,970,770,178
ໂຄງການກໍ່ສ້າງໂຮງງານໄລຍະສອງ	1,659,678,951	1,409,415,579
	6,715,965,357	**6,380,185,757**

6. ຊັບສິນບໍ່ໝຸນວຽນອື່ນໆ

ຊັບສິນບໍ່ໝຸນວຽນອື່ນໆ ແມ່ນສະແດງເປັນມູນຄ່າສຸດທິຂອງທີ່ດິນ ແລະ ເຮືອນ ເຊິ່ງຊື້ໂດຍບໍລິສັດ ແຕ່ຈົດທະບຽນພາຍໃຕ້ຊື່ ທ່ານ ອັນທອງ ສິດທິກຸນ - ອະດີດຜູ້ອຳນວຍການໃຫຍ່ຂອງບໍລິສັດ.

7. ຊັບສິນໝຸນວຽນອື່ນໆ

	30 ມິຖຸນາ 2020 *ກີບ*	*31 ທັນວາ 2019* *ກີບ*
ເງິນລ່ວງໜ້າໃຫ້ພະນັກງານ	202,760,001	116,990,000
ລ່າຍຈ່າຍລ່ວງໜ້າສຳຫຼັບຄ່າບຳລຸງຮັກສາ	230,857,827	1,860,966,996
	433,617,828	**1,977,956,996**

8. ເຄື່ອງໃນສາງ

	30 ມິຖຸນາ 2020 *ກີບ*	*31 ທັນວາ 2019* *ກີບ*
ວັດຖຸດິບ ແລະ ວັດຖຸສິ້ນເປືອງຕ່າງໆ	5,010,199,603	9,655,991,450
ອຸປະກອນ ແລະ ອັດສະດຸ	10,535,287,051	11,933,816,385
ສິນຄ້າພວມຜະລິດ	11,307,538,777	13,387,672,609
ຜະລິດຕະພັນສຳເລັດຮູບ	1,856,493,874	4,760,077,562
ເງິນແຮສຳລັບເຄື່ອງໃນສາງ	(1,184,311,617)	(570,151,756)
	27,525,207,688	**39,167,406,250**

9. ໜີ້ຕ້ອງຮັບອື່ນໆ

	30 ມິຖຸນາ 2020 *ກີບ*	*31 ທັນວາ 2019* *ກີບ*
ເງິນມັດຈຳໃຫ້ລູກຄ້າ	178,360,000	113,896,000
ອື່ນໆ	4,571,850	142,139,247
	182,931,850	**256,035,247**

10. ໜີ້ຕ້ອງຮັບການຄ້າ

	30 ມິຖຸນາ 2020 *ກີບ*	*31 ທັນວາ 2019* *ກີບ*
ລວມໜີ້ຕ້ອງຮັບການຄ້າ	43,797,901,572	48,813,383,647
ເງິນແຮສຳລັບບັນຊີໜີ້ທວງຍາກ	(2,512,770,384)	(1,403,773,338)
	41,285,131,188	**47,409,610,309**

ລາຍລະອຽດຂອງເງິນແຮສຳລັບບັນຊີໜີ້ທວງຍາກນະວັນທີ 30 ມິຖຸນາ 2020 ມີດັ່ງນີ້:

ໄລຍະການກຳນົດ	*ຍອດເຫຼືອໜີ້ຕ້ອງຮັບ*	*ເງິນແຮ*
ການກຳນົດ 6 ເດືອນ ຫາ 1 ປີ	3,121,636,039	936,490,812
ການກຳນົດ 1 ປີ ຫາ 2 ປີ	716,515,431	358,257,715
ຫຼາຍກວ່າ 2 ປີ	1,218,021,857	1,218,021,857
ລວມ	**5,056,173,327**	**2,512,770,384**

ລາຍລະອຽດຂອງເງິນແຮສຳລັບບັນຊີໜີ້ຕ້ອງຮັບທວງຍາກ ນະວັນທີ 31 ທັນວາ 2019 ມີດັ່ງນີ້:

ໄລຍະການກຳນົດ	*ຍອດເຫຼືອໜີ້ຕ້ອງຮັບ*	*ເງິນແຮ*
6 ເດືອນ ຫາ 1 ປີ	386,156,160	115,846,848
1 ປີ ຫາ 2 ປີ	850,003,441	425,001,721
ຫຼາຍກວ່າ 2 ປີ	776,447,825	776,447,825
ລວມ	**2,012,607,426**	**1,317,296,394**

11. ເງິນສົດ

	30 ມິຖຸນາ 2020 *ກີບ*	*31 ທັນວາ 2019* *ກີບ*
ເງິນສົດໃນຄັງ	118,024,769	185,293,682
ເງິນຝາກທະນາຄານ	3,711,210,179	5,856,750,080
	3,829,234,948	**6,042,043,762**

12. ເງິນກູ້ຢືມ

ລາຍລະອຽດຂອງເງິນກູ້ໄລຍະສັ້ນຈາກທະນາຄານນະວັນ ທີ 30 ມິຖຸນາ 2020 ດັ່ງນີ້:

ທະນາຄານ	*ມື້ຄົບກຳນົດ*	*ອັດຕາດອກເບ້ຍຕໍ່ປີ*	*ການຈ່າຍດອກເບ້ຍ*	*ຫຼັກຊັບຄ้ำປะกัน*	*ສະกุนเงิน*	*ຈຳนวนเงิน*
ທະນາຄານລາວ-ຈີນຈຳກັດ	23 ເມສາ 2020	10%	ທຸກເດືອນ	[*]	ກີบ	4,000,000,000
ທະນາຄານລາວ-ຈີນຈຳກັດ	30 ມີນາ 2021	10%	ທຸກເດືອນ	[*]	ກີบ	2,000,000,000
ທະນາຄານລາວ-ຈີນຈຳກັດ	25 ພະຈິກ 2020	10%	ທຸກເດືອນ	[*]	ກີบ	4,000,000,000
ລວม						**10,000,000,000**

[*] ຫຼັກຊັບຄ้ำปะกันปะกอบด้วย ที่ดิน, อาคาร, สางสินค้า, โรงงาน และ ซับสินอื่นๆยู่ เมืองวังวงง, แขวงวงง จัน.

13. ພັນທະອາກອນ

	30 ມິຖຸນາ 2020 *ກີบ*	*31 ທັນວາ 2019* *ກີบ*
ອากอนต้องสิ่งจากผู้สะหมองต่างปะเทด	2,863,594,549	2,783,888,795
ອากอนมูนค่าเพิ่มสิ้นออก	-	453,028,149
หนี้ต้องสิ่งอากอนทำไล *(บิดอะทิบายเลกที 23)*	479,656,526	479,656,526
ອากอนอื่นๆ	1,668,371,079	1,739,007,396
	5,011,622,154	**5,455,580,866**

14. ຄັງສຳຮອງສະຫວັດດີການ

	ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2020 ກີບ	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2019 ກີບ*
ນະວັນທີ 1 ມັງກອນ	1,504,476,810	1,878,498,865
ຫັກຈາກກຳໄລສະສົມ	-	43,045,175
ຈ່າຍອອກ	(732,048,694)	(416,985,872)
ນະວັນທີ 30 ມິຖຸນາ	**772,428,116**	**1,504,558,168**

15. ໜີ້ຕ້ອງສິ່ງອື່ນໆ

	30 ມິຖຸນາ 2020 ກີບ	*31 ທັນວາ 2019 ກີບ*
ໜີ້ຕ້ອງສິ່ງເງິນປັນຜົນ (*) *(ບົດອະທິບາຍເລກທີ 24)*	13,581,363,960	13,581,363,960
ອື່ນໆ	128,430,233	178,965,848
	13,709,794,193	**13,760,329,808**

(*) ລາຍລະອຽດຂອງການຈ່າຍເງິນປັນຜົນມີດັ່ງນີ້:

	30 ມິຖຸນາ 2020 ກີບ	*31 ທັນວາ 2019 ກີບ*
ໜີ້ຕ້ອງຈ່າຍເງິນປັນຜົນ ປະຈຳປີ 2016	3,395,146,565	3,395,146,565
ໜີ້ຕ້ອງຈ່າຍເງິນປັນຜົນ ປະຈຳປີ 2015	5,773,056,205	5,773,056,205
ໜີ້ຕ້ອງຈ່າຍເງິນປັນຜົນ ປະຈຳປີ 2014	4,413,161,190	4,413,161,190
	13,581,363,960	**13,581,363,960**

16. ທຶນຈົດທະບຽນທີ່ຖອກແລ້ວ

16.1 ຮຸ້ນ

	30 ມິຖຸນາ 2020		*31 ທັນວາ 2019*	
	ຈຳນວນ	*ມູນຄ່າ (ກີບ)*	*ຈຳນວນ*	*ມູນຄ່າ (ກີບ)*
ຮຸ້ນທີ່ໄດ້ຮັບອະນຸຍາດ				
ຮຸ້ນທີ່ໄດ້ອອກ ແລະ ຈ່າຍ				
ຮຸ້ນສາມັນ	40,004,000	20,002,000,000	40,004,000	20,002,000,000

ວັນທີ 14 ກຸມພາ 2018, ບໍລິສັດໄດ້ຮັບໜັງສືຢັ້ງຢືນຜົນສຳເລັດການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ເລກທີ 0008/ສຄຄຊ ອອກໃຫ້ໂດຍສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ເນື່ອງຈາກວ່າບໍລິສັດໄດ້ສຳເລັດຂັ້ນຕອນ IPO ເຊິ່ງຮຸ້ນຈຳນວນ 12,001,200 ຮຸ້ນ ລາຄາໜ້າບັດ 500 ກີບ/ຮຸ້ນ ແລະ ລາຄາຂາຍຮຸ້ນມູນຄ່າ 2,400 ກີບ/ຮຸ້ນ ໄດ້ຖືກຂາຍອອກ.

ມູນຄ່າຂອງຮຸ້ນທັງໝົດ 40,004,000 ຮຸ້ນຂອງບໍລິສັດ (ພາຍໃຕ້ການເປັນເຈົ້າຂອງ "ຊີມັງລາວ") ຖືກຈົດທະບຽນຢ່າງເປັນທາງການໃນຕະຫຼາດຫຼັກຊັບ ຕັ້ງແຕ່ວັນທີ 2 ມີນາ 2018. ມູນຄ່າໜ້າບັດຂອງແຕ່ລະຮຸ້ນແມ່ນ 500 ກີບ.

ໂຄງຮ່າງຜູ້ຖືຮຸ້ນຂອງບໍລິສັດ ນະວັນທີ30 ມິຖຸນາ 2020 ມີດັ່ງນີ້:

ຜູ້ຖືຮຸ້ນ	*ຈຳນວນຮຸ້ນ*	*ສ່ວນຮ້ອຍ*
ບໍລິສັດຮ່ວມມືສາກົນດ້ານເສດຖະກິດ-ເຕັກນິກຢຸນນານ ສປ ຈີນ (CYC)	14,280,000	36%
ລັດວິສາຫະກິດ ພັດທະນາກະສິກຳ-ອຸດສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ (DAI)	13,720,000	34%
ບໍລິສັດເອກະຊົນ ແລະ ນັກລົງທຶນລາຍບຸກຄົນອື່ນໆ	12,004,000	30%
	40,004,000	**100%**

16.2 ເງິນປັນຜົນ

ສະກຸນເງິນ: ກີບ

	ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2020	*ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2019*
ເງິນປັນຜົນຕ້ອງຈ່າຍພາຍໃນໄລຍະ	-	**1,200,120,000**
ເງິນປັນຜົນຂອງຮຸ້ນສາມັນສຳລັບ 2019: ບໍ່ມີ	-	-
ເງິນປັນຜົນຂອງຮຸ້ນສາມັນສຳລັບ 2018: 30 ກີບ ຕໍ່ ຮຸ້ນ		1,200,120,000

17. ລາຍຮັບຈາກການຂາຍສິນຄ້າ

	ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2020 ກີບ	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2019 ກີບ*
ຂາຍຊີມັ້ງເປົ່າ	6,741,701,862	16,055,409,043
ຂາຍຊີມັ້ງຜົງ	18,095,667,194	30,250,646,471
	24,837,369,056	**46,306,055,514**

18. ຕົ້ນທຶນຈາກການຂາຍ

	ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2020 ກີບ	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2019 ກີບ*
ຕົ້ນທຶນການຂາຍຊີມັ້ງເປົ່າ	9,627,808,639	17,234,135,046
ຕົ້ນທຶນການຂາຍຊີມັ້ງຜົງ	24,655,747,758	33,684,092,076
	34,283,556,397	**50,918,227,122**

19. ຕົ້ນທຶນການຂາຍ ແລະ ຈຳໜ່າຍ

	ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2020 ກີບ	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2019 ກີບ*
ຕົ້ນທຶນຄ່າຂົນສົ່ງ	283,046,843	1,142,660,136
ລາຍຈ່າຍໃຫ້ພະນັກງານ	455,607,793	517,272,583
ລາຍຈ່າຍຄ່າຫຼຸ້ຍຫ້ຽນ	62,661,156	66,487,888
ຕົ້ນທຶນຂາຍ ແລະ ຈັດຈຳໜ່າຍອື່ນໆ	193,465,255	455,010,066
	994,781,047	**2,181,430,673**

20. ລາຍຈ່າຍໃນການດຳເນີນງານ

	ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2020 ກີບ	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2019 ກີບ*
ລາຍຈ່າຍໃຫ້ພະນັກງານ	1,071,364,146	1,696,388,330
ລາຍຈ່າຍທາງວິຊາການ	723,564,082	766,661,151
ຄ່າຫຼ້ຽຫ້ຽນ	87,173,940	119,124,290
ລາຍຈ່າຍຄ່າສາທາລະນຸປະໂພກ ແລະ ນ້ຳມັນ	100,432,205	150,875,182
ລາຍຈ່າຍຄ່າເຊົ່າ	155,278,137	182,318,247
ລາຍຈ່າຍຄ່າບຳລຸງຮັກສາ	29,451,855	103,145,400
ລາຍຈ່າຍຄ່າການພິມ ແລະ ເຜີຍແຜ່	54,766,500	195,948,000
ລາຍຈ່າຍຄ່າເດີນທາງ	35,095,930	64,740,690
ຄ່າບຳເໜັດ ແລະ ລາຍຈ່າຍອື່ນໆຂອງພະນັກງານ	497,514,864	463,008,426
ລາຍຈ່າຍໃນການບໍລິຫານອື່ນໆ	690,055,263	825,431,340
	3,444,696,922	**4,567,641,056**

21. ລາຍຮັບທາງການເງິນ

	ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2020 ກີບ	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2019 ກີບ*
ລາຍຮັບຈາກດອກເບ້ຍ	8,120,154	275,995,029
ກຳໄລຈາກອັດຕາແລກປ່ຽນ	135,383,120	212,613,440
	143,503,274	**488,608,469**

22. ລາຍຈ່າຍທາງການເງິນ

	ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2020 ກີບ	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2019 ກີບ*
ຂາດທຶນຈາກອັດຕາແລກປ່ຽນ	187,119,407	113,457,301
ລ່າຍຈ່າຍດອກເບ້ຍ	448,888,884	65,555,555
	636,008,291	**179,012,856**

23. ລາຍຈ່າຍອາກອນກຳໄລ

ອີງຕາມໃບຢັ້ງຢືນການລົງທຶນ ສະບັບປັບປຸງ ວັນທີ 17 ພະຈິກ 1998, ບໍລິສັດແມ່ນຈະຖືກຍົກເວັ້ນອາກອນກຳໄລສຳລັບ ສີ່ປີທຳອິດ ໂດຍເລີ່ມຈາກປີທີ່ໄດ້ຮັບກຳໄລທຳອິດ ແລະ ອັດຕາອາກອນກຳໄລຈະຫຼຸດລົງ 50% ຂອງອາກອນກຳໄລທີ່ປະ ກາດໃຊ້ສຳລັບສອງປີຖັດໄປ. ບໍລິສັດມີພັນທະໃນການຈ່າຍອາກອນກຳໄລໃນອັດຕາ 20% ຫຼັງຈາກໄລຍະເວລາຂໍອະນຸ ຍາດຫຼຸດອາກອນ. ຜົນກຳໄລປີທຳອິດ ແມ່ນທ້າຍປີການບັນຊີ ວັນທີ 31 ທັນວາ 2005.

ບໍລິສັດ ໄດ້ຈົດທະບຽນກັບຕະຫຼາດຫຼັກຊັບລາວນັບແຕ່ 2 ມີນາ 2018. ອີງຕາມໜັງສືແຈ້ງການເລກທີ 2618/ກສອ ລົງວັນທີ 4 ມິຖຸນາ 2018 ຈາກກະຊວງການເງິນ, ບໍລິສັດ ໄດ້ຮັບອະນຸຍາດໃຫ້ຫຼຸດອາກອນກຳໄລ 5% ຈາກອັດຕາປົກກະຕິສຳລັບ ຫ້າ ປີທຳອິດເລີ່ມແຕ່ປີ 2018 ຫາ 2021. ຫຼັງຈາກນີ້, ບໍລິສັດມີພັນທະໃນການຈ່າຍອາກອນກຳໄລໃນອັດຕາ 20%. ດັ່ງນັ້ນ, ອາກອນກຳໄລຂອງບໍລິສັດສຳລັບປີ 2019 ຈະຖືກຈ່າຍໃນອັດຕາອາກອນກຳໄລ 15%.

ອີງຕາມກົດໝາຍອາກອນລາຍ ເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019 (ແທນທີ່ ກົດໝາຍອາກອນ ເລກທີ 70/ສພຊ) ເຊິ່ງມີຜົນນຳໃຊ້ແຕ່ວັນທີ 1 ມັງກອນ 2020, ອັດຕາອາກອນກຳໄລ 13% ນຳໃຊ້ເຂົ້າໃນບໍລິສັດຈົດທະບຽນໃນ ຕະຫຼາດຫຼັກ ຊັບ ສຳລັບໄລຍະ 4 ປີ ເລີ່ມຈາກວັນທີຈົດທະບຽນໃນຕະຫຼາດຫຼັກຊັບ ແລະ 20% ສຳລັບປີຕໍ່ໄປ. ບໍລິສັດ ແມ່ນຢູ່ໃນ ລະຫວ່າງການຊີ້ແຈງກັບໜ່ວຍງານອາກອນວ່າແຮງຈູງໃຈດັ່ງກ່າວມີຜົນຕໍ່ກັບບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບ ກ່ອນ ທີ່ກົດໝາຍນີ້ຈະມີຜົນບັງຄັບໃຊ້.

ອາກອນທີ່ເກັບຄືນໂດຍບໍລິສັດ ຕ້ອງໄດ້ຖືກກວດກາໂດຍເຈົ້າໜ້າທີ່ສ່ວຍສາອາກອນ. ການນຳໃຊ້ກົດໝາຍວ່າດ້ວຍສ່ວຍສາ ອາກອນ ແລະ ກົດລະບຽບຕ່າງໆ ມີການປ່ຽນແປງໄປໃນການຕີຄວາມໝາຍທີ່ແຕກຕ່າງກັນ, ມູນຄ່າທີ່ລາຍງານໃນເອກະສານ ລາຍງານການເງິນອາດຈະປ່ຽນແປງພາຍຫຼັງເອກະສານລາຍງານການເງິນຖືກກວດກາໂດຍເຈົ້າໜ້າທີ່ສ່ວຍສາອາກອນ.

ໜີ້ຕ້ອງສົ່ງອາກອນ ແມ່ນອີງຕາມອາກອນກຳໄລຕ້ອງຈ່າຍໃນໄລຍະ. ໜີ້ສິນອາກອນຂອງບໍລິສັດຖືກຄິດໄລ່ໂດຍການນຳໃຊ້ ອັດຕາອາກອນທີ່ໄດ້ຖືກປະກາດໃຊ້ໃນມື້ອອກໃບລາຍງານຖານະການເງິນສຳລັບໄລຍະຫົກເດືອນຕົ້ນປີ.

23. ລາຍຈ່າຍອາກອນກຳໄລ (ຕໍ່)

ການຄາດຄະເນອາກອນກຳໄລກ່ອນຖືກສະແດງດັ່ງລຸ່ມນີ້:

	ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2020 ກີບ	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2019 ກີບ*
ຂາດທຶນກ່ອນອາກອນ	**(15,478,914,163)**	**(10,928,139,425)**
ດັດແກ້ເພື່ອເພີ່ມ/(ຫຼຸດລົງ) ຂາດທຶນ/ກຳໄລກ່ອນຫັກອາກອນ:		
ເງິນແຮ/(ເກັບຄືນເງິນແຮ) ສຳລັບເຄື່ອງໃນສາງ	614,159,861	(209,496,558)
ເງິນແຮ/(ເກັບຄືນເງິນແຮ) ສຳລັບໜີ້ທວງຍາກ	1,108,997,046	(50,111,949)
ລາຍຈ່າຍອື່ນໆທີ່ບໍ່ອະນຸຍາດໃຫ້ຫັກ	-	1,806,992,947
ຄາດຄະເນຂາດທຶນອາກອນກຳໄລຕ້ອງມອບໃນໄລຍະ	**(13,755,757,256)**	**(9,380,754,985)**
ຄາດຄະເນລ່າຍຈ່າຍອາກອນກຳໄລພາຍໃນໄລຍະໃນອັດຕາ 15 % (2019: 15%)	**-**	**-**
ອາກອນກຳໄລຕ້ອງຈ່າຍຕົ້ນໄລຍະ	479,656,526	876,381,305
ອາກອນກຳໄລທີ່ໄດ້ຈ່າຍໃນໄລຍະ	-	(396,724,779)
ໜີ້ຕ້ອງສົ່ງອາກອນກຳໄລທ້າຍໄລຍະ *(ບົດອະທິບາຍເລກທີ 13)*	**479,656,526**	**479,656,526**

24. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ ແມ່ນການປະຕິບັດທາງສັນຍາຕາມລາຄາທີ່ໄດ້ຕົກລົງກັນໄວ້. ລາຍການເຄື່ອນໄຫວທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງພາຍໃນໄລຍະຫົກເດືອນຕົ້ນປີມີດັ່ງລຸ່ມນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ສາຍພົວພັນ*	*ລາຍການເຄື່ອນໄຫວ*	*2020 ກີບ*	*2019 ກີບ*
ບໍລິສັດຮ່ວມມືສາກົນດ້ານ ເສດຖະກິດ-ເຕັກນິກ ຢຸນນານ ສປ ຈີນ (CYC)	ຜູ້ຖືຮຸ້ນ	ຈັດຊື້ວັດຖຸດິບ	217,895,788	471,698,190
		ລາຍຈ່າຍຈາກການຈັດຊື້ວັດຖຸດິບ	191,073,604	1,504,258,742
		ເງິນປັນຜົນທີ່ຕ້ອງຈ່າຍ	-	428,399,636
		ລາຍຈ່າຍເງິນປັນຜົນ	-	441,344,929
ລັດວິສາຫະກິດ ພັດທະນາ ກະສິກຳ-ອຸດສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ (DAI)	ຜູ້ຖືຮຸ້ນ	ຈັດຊື້ວັດຖຸດິບ	858,270,674	4,839,263,150
		ເງິນປັນຜົນທີ່ຕ້ອງຈ່າຍ	-	411,600,356
		ລາຍຈ່າຍຈາກການຈັດຊື້ວັດຖຸດິບ	901,983,380	5,223,098,456
		ລາຍຈ່າຍເງິນປັນຜົນ	-	411,600,356
		ສະສາງຊັບສິນບັດຄົງທີ	-	120,000,000

ຍອດເຫຼືອໜີ້ຕ້ອງຮັບຈາກພາກສ່ວນທີ່ກ່ຽວຂ້ອງ ນະວັນທີ 30 ມິຖຸນາ 2020 ແລະ ວັນທີ 31 ທັນວາ 2019 ດັ່ງລຸ່ມນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ສາຍພົວພັນ*	*ລາຍການເຄື່ອນໄຫວ*	*30 ມິຖຸນາ 2020 ກີບ*	*31 ທັນວາ 2019 ກີບ*
ມູນຄ່າໜີ້ຕ້ອງຮັບພາກສ່ວນທີ່ກ່ຽວຂ້ອງ				
ບໍລິສັດຮ່ວມມືສາກົນດ້ານ ເສດຖະກິດ-ເຕັກນິກ ຢຸນນານ ສປ ຈີນ (CYC)	ຜູ້ຖືຮຸ້ນ	ຈັດຊື້ວັດຖຸດິບ	348,419,864	321,597,680
ລັດວິສາຫະກິດ ພັດທະນາ ກະສິກຳ-ອຸດສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ (DAI)	ຜູ້ຖືຮຸ້ນ	ຈັດຊື້ວັດຖຸດິບ	5,534,595,840	5,578,308,546
			5,883,015,704	**5,899,906,226**

24. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ພາກສ່ວນທີ່ກ່ຽວຂ້ອງ	*ສາຍພົວພັນ*	*ລາຍການເຄື່ອນໄຫວ*	*30 ມິຖຸນາ 2020 ກີບ*	*31 ທັນວາ 2019 ກີບ*
***ໜີ້ຕ້ອງສົ່ງອື່ນໆ** (ບົດອະທິບາຍເລກທີ 15)*				
ບໍລິສັດຮ່ວມມືສາກົນດ້ານເສດຖະກິດ-ເຕັກນິກຢຸນນານ ສປ ຈີນ (CYC)	ຜູ້ຖືຮຸ້ນ	ເງິນປັນຜົນຕ້ອງຈ່າຍ	7,736,383,104	7,736,383,104
ລັດວິສາຫະກິດ ພັດທະນາກະສິ ກຳ-ອຸດສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ (DAI)	ຜູ້ຖືຮຸ້ນ	ເງິນປັນຜົນຕ້ອງຈ່າຍ	5,844,980,856	5,844,980,856
			13,581,363,960	**13,581,363,960**

ລາຍການເຄື່ອນໄຫວອື່ນໆຂອງພາກສ່ວນທີ່ກ່ຽວຂ້ອງ

ຄ່າຕອບແທນໃຫ້ຄະນະບໍລິຫານພາຍໃນໄລຍະມີດັ່ງລຸ່ມນີ້:

	ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2020 ກີບ	*ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2019 ກີບ*
ເງິນເດືອນ ແລະ ໂບນັດ	331,877,890	356,519,850
	331,877,890	**356,519,850**

25. ໜີ້ສິນທີ່ອາດຈະເກີດຂຶ້ນ

ຄ່າຊົດເຊີຍສຳຫຼັບການຍົກເລີກສັນຍາຈ້າງພະນັກງານ

ຄະນະບໍລິຫານກຳລັງຮັບຮອງການຮ້ອງຂໍລາອອກຂອງພະນັກງານເປັນສ່ວນໜຶ່ງຂອງຄວາມພະຍາຍາມໃນການຫຼຸດລາຍຈ່າຍດຳເນີນງານ. ນະວັນທີຂອງເອກະສານລາຍງານການເງິນສະບັບນີ້, ບໍລິສັດແມ່ນຢູ່ໃນຂັ້ນຕອນການສະຫຼຸບບັນດາຄ່າຊົດເຊີຍສຳລັບພະນັກງານທີ່ຈະລາອອກ. ດັ່ງນັ້ນ, ຈຶ່ງບໍ່ມີການຕັ້ງຄັງສຳຮອງສຳລັບໜີ້ສິນຂອງຄ່າຊົດເຊີຍດັ່ງກ່າວໃນເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີ.

26. ການແບ່ງຂໍ້ມູນຕາມພາກສ່ວນ

ກິດຈະກຳຫຼັກຂອງບໍລິສັດທີ່ລະບຸໃນໃບອະນຸຍາດການດຳເນີນທຸລະກິດແມ່ນ ການຜະລິດ ແລະ ຈຳໜ່າຍຊີມັງ ແລະ ຜະລິດຕະພັນຊີມັງອື່ນໆທີ່ກ່ຽວຂ້ອງ. ນອກຈາກນີ້, ກິດຈະກຳເຫຼົ່ານີ້ແມ່ນໄດ້ດຳເນີນທຸລະກິດພາຍໃນ ສປປ ລາວ ເທົ່ານັ້ນ. ດັ່ງນັ້ນ ຄະນະບໍລິຫານຂອງບໍລິສັດ ເຫັນວ່າມີພຽງພາກສ່ວນດຽວສຳລັບທຸລະກິດ ແລະ ພູມສາດເທົ່ານັ້ນ. ສະນັ້ນ, ການນຳສະເໜີການແບ່ງຂໍ້ມູນຕາມພາກສ່ວນແມ່ນບໍ່ມີຄວາມຈຳເປັນ.

27. ເຫດການພາຍຫຼັງວັນທີຂອງໃບລາຍງານຖານະການເງິນ

ວັນທີ 25 ສິງຫາ 2020, ບໍລິສັດໄດ້ອອກຖະແຫຼງການ ເລກທີ 202/ບຊລ ກ່ຽວກັບການຢຸດການຜະລິດທັງໝົດຊົ່ວຄາວຈົນກວ່າຈະມີແຈ້ງການເພີ່ມເຕີມ. ນະວັນທີຂອງເອກະສານລາຍງານການເງິນສະບັບນີ້, ການຜະລິດແມ່ນຍັງບໍ່ທັນໄດ້ສືບຕໍ່ດຳເນີນການ.

ບໍ່ໄດ້ມີເຫດການໃດທີ່ສຳຄັນເກີດຂຶ້ນຫຼັງຈາກວັນທີ່ກະກຽມໃບລາຍງານຖານະການເງິນສຳລັບໄລຍະຫົກເດືອນຕົ້ນປີ ທີ່ຮຽກຮ້ອງໃຫ້ມີການດັດແກ້ ຫຼື ເປີດເຜີຍໃນເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີ.

28. ການອະນຸມັດອອກເອກະສານລາຍງານການເງິນ

ເອກະສານລາຍງານການເງິນສຳລັບຫົກເດືອນຕົ້ນປີນະວັນທີ ແລະ ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2020 ແມ່ນໄດ້ຖືກອະນຸມັດໂດຍຄະນະບໍລິຫານຂອງບໍລິສັດ ໃນວັນທີ 7 ກັນຍາ 2020.

ທ່ານ ຈ້າງ ລ້ວ
ຜູ້ອຳນວຍການໃຫຍ່

ທ່ານ ວິໄຊ ດວງສະຫວັດ
ຮອງຜູ້ຈັດການຝ່າຍການບັນຊີ - ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

7 ກັນຍາ 2020